# 2020

# ບົດລາຍງານປະຈຳປີ

# ANNUAL REPORT




ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

# ບົດຄຳເຫັນຂອງຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ວິໄສທັດຮອດປີ 2030 ກ່ຽວກັບການພັດທະນາຕະຫຼາດທຶນຂອງ ສປປ ລາວ ແມ່ນ:
“ເປັນຂໍກະແຈ ໃນການຈັດສັນແຫຼ່ງທຶນ ທີ່ມີຄວາມໜ້າເຊື່ອຖື ແລະ ມີມາດຕະຖານສາກົນ”



ໃນປີ 2020 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ໄດ້ສຸມໃສ່ເຄື່ອນໄຫວວຽກງານ ເພື່ອບັນລຸວິໄສທັດຮອດປີ 2030 ແລະ ແຜນພັດທະນາຕະຫຼາດທຶນຂອງ ສປປ ລາວ 10 ປີ (2016-2025) ທີ່ໄດ້ກຳນົດໄວ້. ເຖິງວ່າ ໃນປີທີ່ຜ່ານມາ ສະພາບແວດລ້ອມຫຼາຍດ້ານຂອງພາກພື້ນ ແລະ ສາກົນ ມີການປ່ຽນແປງຢ່າງໄວວາ ຊຶ່ງສົ່ງຜົນຕໍ່ການພັດທະນາຕະຫຼາດທຶນ ເປັນຕົ້ນ ການແຜ່ລະບາດຂອງພະຍາດອັກເສບປອດ COVID-19, ການປ່ຽນແປງດ້ານເຕັກໂນໂລຊີທາງການເງິນ, ການເຄື່ອນໄຫວທຸລະກິດໂດຍຄຳນຶງເຖິງສິ່ງແວດລ້ອມ ແລະ ຄວາມຍືນຍົງ ແລະ ອື່ນໆ ລວມທັງ ສະພາບແວດລ້ອມພາຍໃນປະເທດ ເປັນຕົ້ນ ນະໂຍບາຍມະຫາພາກໃນການສົ່ງເສີມການເຂົ້າເຖິງແຫຼ່ງທຶນຂອງວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍ (SMEs) ແຕ່ ສຄຄຊ ກໍ່ໄດ້ສຸມໃສ່ສ້າງຄວາມເຂັ້ມແຂງ ແລະ ຄວາມພ້ອມໃຫ້ສອດຄ່ອງກັບການປ່ຽນແປງ ແລະ ເງື່ອນໄຂດ້ານຕ່າງໆ ແນໃສ່ພັດທະນາວຽກງານຕະຫຼາດທຶນຂອງ ສປປ ລາວ ໃຫ້ແທດເໝາະກັບສະພາບ ແລະ ທິດທາງການຂະຫຍາຍຕົວຂອງຕະຫຼາດທຶນ ສປປ ລາວ ໃນອານາຄົດ.

ໃນປີ 2020 ຄຄຊ ແລະ ສຄຄຊ ໂດຍສົມທົບກັບ ບັນດາຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ໄດ້ສຳເລັດການຈັດພິທີສະຫຼຸບຜົນງານຕະຫຼາດທຶນລາວ ຄົບຮອບ 10 ປີ (2010-2020) ໃນເດືອນ ຕຸລາ 2020 ເພື່ອສະຫຼຸບຜົນງານພົ້ນເດັ່ນໃນໄລຍະຜ່ານມາ ແລະ ວາງວິໄສທັດໃນຕໍ່ໜ້າ ໃຫ້ສັງຄົມໄດ້ຮັບຮູ້ຢ່າງກວ້າງຂວາງ. **ດ້ານນິຕິກຳ** ໄດ້ສຳເລັດການປັບປຸງກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ທ່ານ ປະທານປະເທດ ໄດ້ອອກດຳລັດປະກາດໃຊ້ຢ່າງເປັນທາງການ ໃນວັນທີ 14 ມັງກອນ 2020; ສຳເລັດການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບ ຈຳນວນ 14 ສະບັບ. **ດ້ານນະໂຍບາຍມະຫາພາກ** ເພື່ອສືບຕໍ່ດຶງດູດ ແລະ ຊຸກຍູ້ໃຫ້ມີການເຂົ້າຮ່ວມ ແລະ ປະກອບສ່ວນໃນວຽກງານຕະຫລາດທຶນ, ລັດຖະບານ ໄດ້ຫຼຸດອັດຕາອາກອນກຳໄລ ຈາກ 20% ມາເປັນ 13% ເປັນເວລາ 4 ປີ ຕໍ່ເນື່ອງໃຫ້ແກ່ບໍລິສັດຈົດທະບຽນ ແລະ ໄດ້ຍົກເວັ້ນຄ່າທຳນຽມ ຊື້-ຂາຍຫຼັກຊັບ ໃນອັດຕາ 0,3% ໃນສ່ວນຂອງລັດຖະບານ. **ສຳລັບການບັງຄັບໃຊ້ກົດໝາຍ ແລະ ນິຕິກຳໃນຂົງເຂດວຽກງານຫຼັກຊັບ** ເຫັນວ່າມີປະສິດທິພາບ ແລະ ສາມາດສະກັດກັ້ນການກະທຳຜິດໄດ້ຫຼາຍຂຶ້ນ ເຊິ່ງໃນປີຜ່ານມາ ສຄຄຊ ໄດ້ປະຕິບັດມາດຕະການສຶກສາອົບຮົມ ແລະ ມາດຕະການປັບໃໝ ຕໍ່ຜູ້ມີສ່ວນຮ່ວມໃນຕະຫຼາດທຶນຈຳນວນໜຶ່ງ.

**ຕິດພັນກັບການສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ**, ໄດ້ອອກແຈ້ງການກ່ຽວກັບການຈັດຕັ້ງປະຕິບັດ IFRS ເພື່ອໃຫ້ແທດເໝາະກັບເງື່ອນໄຂຕົວຈິງຂອງ ສປປ ລາວ; ຄົ້ນຄວ້າສ້າງແຜນປະຕິບັດງານ, ແຜນຂ້າມຜ່ານ ແລະ ຄໍາແນະນໍາ ຈັດຕັ້ງປະຕິບັດ IFRS ສໍາລັບຂະແໜງການຫຼັກຊັບ; ໄດ້ສໍາເລັດການຮ່າງບັດປະເມີນການຈັດຕັ້ງປະຕິບັດຄໍາແນະນໍາວ່າດ້ວຍການຄຸ້ມຄອງບໍລິຫານສໍາລັບບໍລິສັດຈົດທະບຽນ (Lao CG Scorecard) ເບື້ອງຕົ້ນ ພ້ອມທັງ ໄດ້ລົງເຜີຍແຜ່ນິຕິກໍາ ແລະ ບົດຮຽນທີ່ຈໍາເປັນ ໃຫ້ແກ່ສະມາຊິກສະພາບໍລິຫານ ແລະ ຄະນະອໍານວຍການຂອງບໍລິສັດຈົດທະບຽນ ເພື່ອຮັບປະກັນການປະຕິບັດໜ້າທີ່ຂອງພວກກ່ຽວ ແນໃສ່ປົກປ້ອງຜົນປະໂຫຍດຂອງຜູ້ຖືຮຸ້ນ. **ສໍາລັບ ສະຖາບັນສື່ກາງດ້ານຫຼັກຊັບ**, ໄດ້ສໍາເລັດການສ້າງປຶ້ມຄູ່ມື ແລະ ເລີ່ມຈັດຕັ້ງປະຕິບັດຫຼັກການຄຸ້ມຄອງບໍລິສັດຫຼັກຊັບ ຕາມແບບຕີລາຄາຄວາມສ່ຽງ (Risk-Based Supervision); ບັນດາບໍລິສັດຫຼັກຊັບໄດ້ຫັນທິດຈາກການເປັນຄູ່ແຂ່ງ ມາເປັນຄູ່ຮ່ວມມືທີ່ດີ ພ້ອມກັນພັດທະນາຕະຫຼາດທຶນ ແລະ ໄດ້ຂະຫຍາຍຕາໜ່າງການໃຫ້ບໍລິການຜ່ານທະນາຄານທຸລະກິດ, ສາຂາ, ໜ່ວຍບໍລິການ ເພື່ອເປັນຕົວແທນຂາຍຮຸ້ນ, ພົນທະບັດລັດຖະບານ ແລະ ໃຫ້ຄວາມຮູ້ກ່ຽວກັບວຽກງານຫຼັກຊັບ.

**ໃນສ່ວນຂອງຜະລິດຕະພັນຫຼັກຊັບ**, ສຄຄຊ ໄດ້ສໍາເລັດການຄົ້ນຄວ້າຜະລິດຕະພັນໃໝ່ ຄື: ການນໍາເອົາຮຸ້ນໄປເປັນຮຸ້ນອ້າງອີງ ເພື່ອອອກໃບຢັ້ງຢືນສິດ (Depository Receipt: DR) ເພື່ອຊ່ວຍສ້າງສະພາບຄ່ອງໃຫ້ແກ່ຕະຫຼາດຫຼັກຊັບລາວ ແລະ ຜູ້ຖືຄອງຮຸ້ນ ແລະ ສໍາເລັດເບື້ອງຕົ້ນການຄົ້ນຄວ້າກົນໄກການສ້າງກະດານຊື້-ຂາຍຮຸ້ນ ສໍາລັບວິສາຫະກິດທີ່ບໍ່ໄດ້ເງື່ອນໄຂຈົດທະບຽນໃນການດານຫຼັກ ແນໃສ່ໃຫ້ວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍ (SMEs) ສາມາດລະດົມທຶນຜ່ານຕະຫຼາດທຶນ. ຄຽງຄູ່ກັນນີ້, **ສຄຄຊ ໄດ້ສືບຕໍ່ໃຫ້ຄວາມສໍາຄັນວຽກງານຝຶກອົບຮົມ ແລະ ໂຄສະນາເຜີຍແຜ່** ວຽກງານຕະຫຼາດທຶນໃຫ້ແກ່ມວນຊົນ ໂດຍໄດ້ປັບປຸງ ເນື້ອໃນ ແລະ ຮູບແບບການໂຄສະນາເພື່ອໃຫ້ແທດເໝາະກັບກຸ່ມເປົ້າໝາຍ ແລະ ໄດ້ສ້າງເຄື່ອງມືສື່ສານທີ່ໜ້າສົນໃຈ ແລະ ເຂົ້າໃຈງ່າຍ ກ່ຽວກັບວຽກງານຕະຫຼາດທຶນ ສໍາລັບມວນຊົນ. ພ້ອມນີ້ ເພື່ອຍົກສູງຄວາມຮູ້, ຄວາມສາມາດທາງດ້ານວິຊາການ **ສຄຄຊ ໄດ້ເພີ່ມທະວີການຮ່ວມມືໃນຮູບແບບ ສອງຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງສາກົນ** ໂດຍໄດ້ຈັດສໍາມະນາໃນຫົວຂໍ້ຕ່າງໆຢູ່ພາຍໃນປະເທດ ແລະ ຫັນການເຂົ້າຮ່ວມຝຶກອົບຮົມ ຢູ່ຕ່າງປະເທດ ມາເປັນການເຂົ້າຮ່ວມຜ່ານລະບົບອອນລາຍ; ຖືໂອກາດຈາກການເຂົ້າເປັນສະມາຊິກສໍາຮອງຂອງອົງການ IOSCO ເພື່ອເຂົ້າຮ່ວມກອງປະຊຸມ ແລະ ສໍາມະນາໃນລະດັບຕ່າງໆ ເຊິ່ງໄດ້ສ້າງໂອກາດໃຫ້ພະນັກງານ ສຄຄຊ ໄດ້ຮຽນຮູ້ສິ່ງໃໝ່ໆ ເພື່ອນໍາມາປັບປຸງນິຕິກໍາ ແລະ ສ້າງແນວທາງໃນການຄຸ້ມຄອງວຽກງານຫຼັກຊັບ ໃຫ້ສອດຄ່ອງກັບມາດຕະຖານສາກົນເທື່ອລະກ້າວ.

ໃນຕໍ່ໜ້າ ຄາດວ່າການພັດທະນາຕະຫຼາດທຶນ ສປປ ລາວ ຈະປະເຊີນທັງກາລະໂອກາດ ແລະ ສິ່ງທ້າທາຍຫຼາຍດ້ານ. ສະນັ້ນ, ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນພັດທະນາຕະຫຼາດທຶນຂອງ ສປປ ລາວ 5 ປີ (2021-2025), ສຄຄຊ ຈະເລັ່ງຈັດຕັ້ງປະຕິບັດ ແຜນງານ-ໂຄງການໃນການພັດທະນາຕະຫຼາດທຶນ ສປປ ລາວ ປະຈໍາປີ 2021 ໃຫ້ບັນລຸຕາມລະດັບຄາດໝາຍ ໂດຍສືບຕໍ່ເອົາໃຈໃສ່ ສ້າງ ແລະ ປັບປຸງນິຕິກໍາລຸ່ມກົດໝາຍໃຫ້ມີຄວາມສອດຄ່ອງກັບກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ເພື່ອເປັນບ່ອນອີງໃນການເຄື່ອນໄຫວວຽກງານຫຼັກຊັບໃຫ້ມີຄວາມຄ່ອງຕົວ; ສຶກສາຄົ້ນຄວ້າ

ກະດານຊື້-ຂາຍຫຼັກຊັບໃນ PAM ແລະ ສ້າງເງື່ອນໄຂໃຫ້ SMEs ສາມາດຂຶ້ນທະບຽນໃນກະດານ PAM; ສືບຕໍ່ຊຸກຍູ້ລັດວິສາຫະກິດ ທີ່ນອນໃນບັນຊີລາຍຊື່ ໃນການກະກຽມຄວາມພ້ອມຮອບດ້ານເພື່ອຫັນເປັນບໍລິສັດມະຫາຊົນ, ອອກຈໍາໜ່າຍຮຸ້ນ ແລະ ຈົດທະບຽນໃນ ຕລຊລ; ປັບປຸງເງື່ອນໄຂການອອກຈໍາໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ເງື່ອນໄຂການຈົດທະບຽນໃນຕະຫຼາດຂັ້ນສອງ ເພື່ອໃຫ້ແທດເໝາະກັບເງື່ອນໄຂຂອງວິສາຫະກິດພາຍໃນປະເທດໃຫ້ຫຼາຍຂຶ້ນ; ກະກຽມຄວາມພ້ອມ ການຈັດຕັ້ງປະຕິບັດ CG Guideline ແລະ ການປະເມີນອີງຕາມ Lao CG Scorecard; ສືບຕໍ່ຈັດຕັ້ງປະຕິບັດການຄຸ້ມຄອງບໍລິສັດຫຼັກຊັບຕາມແບບຕີລາຄາຄວາມສ່ຽງ; ສືບຕໍ່ຄົ້ນຄວ້າຜະລິດຕະພັນໃໝ່ ທີ່ແທດເໝາະກັບຕະຫຼາດທຶນລາວ; ສືບຕໍ່ຈັດຕັ້ງວຽກງານໂຄສະນາເຜີຍແຜ່ດ້ວຍຫຼາຍຮູບການທີ່ເໝາະສົມ; ສືບຕໍ່ຮ່ວມມື ໃນຮູບແບບສອງຝ່າຍ ແລະ ຫຼາຍຝ່າຍ ຢ່າງເປັນປົກກະຕິ ເພື່ອຍາດແຍ່ງເອົາການຊ່ວຍເຫຼືອທາງດ້ານວິຊາການ ແລະ ກະກຽມສະໝັກເຂົ້າເປັນສະມາຊິກສົມບູນຂອງອົງການ IOSCO ເພື່ອຍົກສູງຖານະບົດບາດວຽກງານຫຼັກຊັບຂອງ ສປປ ລາວ ໃນເວທີສາກົນ.

# ສະຖິຕິສຳຄັນໃນປີ 2020



ປີ 2020 ໄດ້ສ້າງ ແລະ ປັບປຸງນິຕິກຳ 14 ສະບັບ ປະກອບມີ: ຂໍ້ຕົກລົງ 4 ສະບັບ, ແຈ້ງການ 5 ສະບັບ ແລະ ຄຳແນະນຳ 5 ສະບັບ (ປະຈຸບັນ ສຄຄຊ ມີນິຕິກຳທັງໝົດ 75 ສະບັບ)



- ໃນປີ 2020 ນັກວິຊາຊີບທັງໝົດ **73 ຄົນ** ປະກອບມີ: ນັກວິຊາຊີບທຸລະກິດຫຼັກຊັບ 33 ຄົນ, ນັກວິຊາຊີບກວດສອບ 17 ຄົນ ແລະ ນັກວິຊາຊີບປະເມີນມູນຄ່າຊັບສິນ 23 ຄົນ)



ບັນຊີຜູ້ລົງທຶນທັງໝົດໃນປີ 2020 **ເພີ່ມຂຶ້ນ 671 ບັນຊີ**

(ທັງໝົດມີ **16.024 ບັນຊີ** ຄື:

ພາຍໃນ 12.618 ບັນຊີ

ຕ່າງປະເທດ 3.406 ບັນຊີ).



- ມູນຄ່າການຊື້-ຂາຍ ໃນປີ 2020 ແມ່ນ **72,89 ຕື້ກີບ** (ທັງໝົດນັບແຕ່ເປີດຕະຫຼາດມີ **1.667,38 ຕື້ກີບ**);
- ມູນຄ່າຕະຫຼາດໃນທ້າຍປີ 2020 ແມ່ນ **98.978 ຕື້ກີບ**;
- ດັດຊະນີຫຼັກຊັບທ້າຍປີ 2020 ປິດຢູ່ທີ່ **598,7 ຈຸດ.**



- ປີ 2020 ມີບໍລິສັດຈົດທະບຽນ ທັງໝົດມີ **11** ແຫ່ງ;
- ໄດ້ຮັບຮູ້ການອອກຈຳໜ່າຍຮຸ້ນກູ້ ຢູ່ປະເທດໄທ 2 ຄັ້ງ ມູນຄ່າ 494 ຕື້ກີບ;
- ການອອກຈຳໜ່າຍພັນທະບັດລັດຖະບານ ຜ່ານ ຕລຊລ **1.152** ຕື້ກີບ ແລະ **11,92** ລ້ານໂດລາສະຫະລັດ.
- ຍອດສະສົມການລະດົມທຶນຜ່ານການອອກຫຼັກຊັບ (ຮຸ້ນ ແລະ ຮຸ້ນກູ້) ທັງພາຍໃນ ແລະ ຕ່າງປະເທດ ຮອດປັດຈຸບັນ: **19.965 ຕື້ກີບ.**
- ຍອດສະສົມການລະດົມທຶນ ອອກຈຳໜ່າຍພັນທະບັດລັດຖະບານຜ່ານ ຕລຊລ ຮອດປັດຈຸບັນ **2.810** ຕື້ກີບ ແລະ **11,92** ລ້ານໂດລ້າສະຫະລັດ.



- ບໍລິສັດຫຼັກຊັບ **4 ແຫ່ງ**
- ບໍລິສັດກວດສອບ **4 ແຫ່ງ**
- ບໍລິສັດປະເມີນມູນຄ່າຊັບສິນ **9 ແຫ່ງ**
- ທະນາຄານດູແລຊັບສິນ **3 ແຫ່ງ**




- ກ່າວເຕືອນ **1 ຄັ້ງ**
- ປັບໃໝ **5 ຄັ້ງ**

# ສາລະບານ

**I. ສະພາບຕະຫຼາດທຶນ ໃນປີ2020 ____ 1**

1. ສະພາບຕະຫຼາດທຶນຂອງຕ່າງປະເທດ ____ 1

2. ສະພາບຕະຫຼາດທຶນຂອງ ສປປ ລາວ ____ 1

**II. ການຄຸ້ມຄອງວຽກງານຫຼັກຊັບໃນປີ2020 ____ 2**

1. ອົງການຄຸ້ມຄອງວຽກງານຫຼັກຊັບ ____ 2

1.1 ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ____ 2

1.2 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ____ 4

2. ຜົນສຳເລັດທີ່ພົ້ນເດັ່ນ ໃນປີ 2020 ____ 7

2.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ ____ 8

2.1.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ____ 8

2.1.2 ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ ____ 9

2.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ____ 10

2.3 ການຄຸ້ມຄອງຕະຫຼາດຫຼັກຊັບລາວ (ຕລຊລ) ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ ____ 11

2.4 ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ ____ 14

2.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ ____ 14

2.6 ການບັງຄັບໃຊ້ກົດໝາຍ ແລະ ນິຕິກຳໃນຂົງເຂດວຽກງານຫຼັກຊັບ ____ 15

2.7 ການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ ____ 15

2.8 ການຮ່ວມມືສາກົນ ____ 17

**III. ທິດທາງແຜນການ ປີ2021 ____ 19**

1. ຄາດຄະເນສະພາບຕະຫຼາດທຶນຂອງຕ່າງປະເທດ ____ 19

2. ຄາດຄະເນສະພາບຕະຫຼາດທຶນຂອງ ສປປ ລາວ ____ 20

3. ໜ້າວຽກຕົ້ນຕໍທີ່ຕ້ອງໄດ້ສຸມໃສ່ໃນປີ 2021 ____ 20

3.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ວຽກງານຫຼັກຊັບ ____ 20

3.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ____ 20

3.3 ການຄຸ້ມຄອງຕະຫຼາດຫຼັກຊັບ ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ ____ 21

3.4 ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ ____ 21

3.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ ____ 21

3.6 ການໂຄສະນາເຜີຍແຜ່ ແລະ ໃຫ້ຄວາມຮູ້ແກ່ມວນຊົນ ____ 21

3.7 ການຮ່ວມມືສາກົນ ____ 22

## I. ສະພາບຕະຫຼາດທຶນ ໃນປີ 2020

### 1. ສະພາບຕະຫຼາດທຶນຂອງຕ່າງປະເທດ

ສະພາບຕະຫຼາດທຶນຕ່າງປະເທດ ເຫັນວ່າສ່ວນຫຼາຍໄດ້ປັບຕົວດີຂຶ້ນ ເຖິງວ່າໃນຊ່ວງຕົ້ນປີ ສະພາບຕະຫຼາດທຶນທົ່ວໂລກຈະປັບຕົວຫຼຸດລົງ ແລະ ມີຄວາມຜັນຜວນ ເນື່ອງຈາກໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດອັກເສບປອດ (COVID-19) ແຕ່ໃນໄລຍະທ້າຍປີ ດັດຊະນີຂອງຕະຫຼາດສ່ວນໃຫຍ່ສາມາດປັບຕົວເພີ່ມຂຶ້ນ ເນື່ອງຈາກວ່າ ຜູ້ລົງທຶນເລີ່ມມີຄວາມເຊື່ອໝັ້ນຕໍ່ ຄວາມຄືບໜ້າໃນການພັດທະນາວັກແຊງຕ້ານ COVID-19, ມາດຕະການກະຕຸ້ນເສດຖະກິດຂອງບັນດາປະເທດ ເປັນຕົ້ນ: ທະນາຄານກາງຍີ່ປຸ່ນ ມີມະຕິຜ່ອນຄາຍນະໂຍບາຍການເງິນເພີ່ມເຕີມ ດ້ວຍການຍົກເລີກເພດານການຊື້ພັນທະບັດລັດຖະບານ ແລະ ການພັດທະນາເສດຖະກິດໂລກ ໂດຍສະເພາະແມ່ນການແກ້ໄຂບັນຫາທາງການຄ້າຂອງປະເທດມະຫາອຳນາດ ທີ່ມີຄວາມຄືບໜ້າໄປໃນທິດທາງທີ່ດີຂຶ້ນ ເຊິ່ງທັງໝົດເຫຼົ່ານີ້ ລ້ວນແຕ່ເປັນການສະໜັບສະໜູນໃຫ້ແກ່ການຂະຫຍາຍຕົວຂອງຕະຫຼາດທຶນ.

### 2. ສະພາບຕະຫຼາດທຶນຂອງ ສປປ ລາວ

ໃນໄລຍະປີ 2020 ສະພາບໂດຍລວມຂອງເສດຖະກິດ ຂອງ ສປປ ລາວ ແມ່ນມີທ່າອ່ຽງຫຼຸດລົງຕາມທິດທາງຂອງພາກພື້ນ ແລະ ສາກົນ ເນື່ອງຈາກການລົງທຶນຂອງຜູ້ລົງທຶນຕ່າງປະເທດ ແລະ ການສົ່ງອອກສິນຄ້າຂອງບັນດາໂຮງຈັກໂຮງງານ ກໍ່ມີປະລິມານຫຼຸດລົງຫຼາຍ. ດ້ານການເຄື່ອນໄຫວຂອງຕະຫຼາດທຶນລາວ ກໍ່ໄດ້ຮັບຜົນກະທົບຈາກສະພາບການດັ່ງກ່າວເຊັ່ນດຽວກັນ ໂດຍໄດ້ເຮັດໃຫ້ປະລິມານການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດຫຼຸດລົງ 31,91% ຈາກທ້າຍປີ 2019, ສ່ວນການຊື້-ຂາຍຂອງຜູ້ລົງທຶນພາຍໃນປະເທດ ແມ່ນບໍ່ມີຄວາມແຕກໂຕນກັບປີຜ່ານມາຫຼາຍ ເນື່ອງຈາກພຶດຕິກຳການຊື້-ຂາຍຮຸ້ນຂອງຜູ້ລົງທຶນພາຍໃນ ໃນຕະຫຼາດຫຼັກຊັບລາວ (ຕລຊລ) ສ່ວນໃຫຍ່ບໍ່ໄດ້ມີຈຸດປະສົງຊື້-ຂາຍເພື່ອເອົາກຳໄລ ຈຶ່ງເຮັດໃຫ້ການເຄື່ອນໄຫວຊື້-ຂາຍຮຸ້ນຂອງຜູ້ລົງທຶນພາຍໃນ ໃນຕະຫຼາດທຶນລາວ ບໍ່ໄດ້ຮັບຜົນກະທົບຫຼາຍຄືກັບປະເທດອື່ນ.

ຮອດທ້າຍປີ 2020 ວິສາຫະກິດສາມາດລະດົມແຫຼ່ງທຶນໄລຍະຍາວ ໂດຍຜ່ານການອອກຈຳໜ່າຍຮຸ້ນຢູ່ພາຍໃນປະເທດ ແລະ ອອກຮຸ້ນກູ້ຢູ່ຕ່າງປະເທດ ຈຳນວນ 19.965 ຕື້ກີບ ກວມເອົາ 12,17% ຂອງ GDP. ແຫຼ່ງທຶນດັ່ງກ່າວໄດ້ປະກອບສ່ວນຢ່າງໃຫຍ່ຫຼວງໃນການຂະຫຍາຍທຸລະກິດ ແລະ ການບໍລິການຂອງວິສາຫະກິດ ໂດຍໄດ້ຖືກນຳໃຊ້ເຂົ້າໃນເປົ້າໝາຍຕ່າງໆ ເປັນຕົ້ນ ສ້າງເຂື່ອນໄຟຟ້າ, ສ້າງປໍ້ານໍ້າມັນ, ສູນການຄ້າ, ຜະລິດຊີມັງ, ຜະລິດນໍ້າມັນປາມ, ຂະຫຍາຍທຸລະກິດເຊົ່າສິນເຊື່ອ, ນຳໃຊ້ເປັນທຶນໝູນວຽນໃນການເຄື່ອນໄຫວທຸລະກິດ ແລະ ອື່ນໆ. ປັດຈຸບັນ ຕະຫຼາດຫຼັກຊັບລາວ ມີບໍລິສັດຈົດທະບຽນ 11 ແຫ່ງ ຈາກຫຼາຍຂະແໜງການ ເປັນຕົ້ນ ສະຖາບັນການເງິນ, ພະລັງງານ, ກະສິກຳ, ອຸດສະຫະກຳ, ການຄ້າ-ການບໍລິການ ແລະ ອື່ນໆ.

ຄຽງຄູ່ກັນນີ້, ເພື່ອເປັນການພັດທະນາຕະຫຼາດທຶນ ກໍ່ຄືເສດຖະກິດຂອງ ສປປ ລາວ, ສຄຄຊ ໄດ້ເອົາໃຈໃສ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອສ້າງ ແລະ ປັບປຸງກົນໄກຂອງຕະຫຼາດທຶນ ເພື່ອໃຫ້ສາມາດອອກຈຳໜ່າຍພັນທະບັດລັດຖະບານຜ່ານ ຕລຊລ ນັບແຕ່ທ້າຍປີ 2018 ເປັນຕົ້ນມາ. ຮອດທ້າຍປີ 2020 ສາມາດລະດົມທຶນໃຫ້ແກ່ລັດຖະບານຜ່ານ ຕລຊລ ແລ້ວຈຳນວນ 2.810 ຕື້ກີບ ແລະ 11,92 ລ້ານໂດລ້າສະຫະລັດ (ປີ 2020 ຈຳນວນ 1.152 ຕື້ກີບ ແລະ 11,92 ລ້ານໂດລາສະຫະລັດ) ຊຶ່ງກົນໄກດັ່ງກ່າວ ໄດ້ເຮັດໃຫ້ການຂາຍພັນທະບັດລັດຖະບານ ຄ່ອຍໆຫັນເຂົ້າສູ່ລະບົບຕະຫຼາດທຶນ.

## II. ການຄຸ້ມຄອງວຽກງານຫຼັກຊັບໃນປີ 2020

### 1. ອົງການຄຸ້ມຄອງວຽກງານຫຼັກຊັບ

### 1.1 ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ)

ຄຄຊ ມີພາລະບົດບາດເປັນຜູ້ຄຸ້ມຄອງວຽກງານຫຼັກຊັບຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍແມ່ນ ສຄຄຊ ເປັນຜູ້ຮັບຜິດຊອບໂດຍກົງໃນການ ຄຸ້ມຄອງ, ຕິດຕາມ ກວດກາ ວຽກງານຫຼັກຊັບບົນພື້ນຖານການປະສານສົມທົບ ແລະ ແລກປ່ຽນຂໍ້ມູນ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ. ຄຄຊ ມີສິດ ແລະ ໜ້າທີ່ ໃນການຄົ້ນຄວ້າ ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານຫຼັກຊັບ; ໂຄສະນາເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຫຼັກຊັບ; ຮັບຮອງລະບຽບການກ່ຽວກັບວຽກງານຫຼັກຊັບ ແລະ ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ນັບແຕ່ ຄຄຊ ໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການໃນ ປີ 2009 ເປັນຕົ້ນມາ, ຄຄຊ ໄດ້ເອົາໃຈໃສ່ປະຕິບັດໜ້າທີ່ຂອງຕົນ ໃນການຄຸ້ມຄອງ ແລະ ພັດທະນາຕະຫຼາດທຶນຂອງ ສປປ ລາວ ໃຫ້ມີປະສິດທິພາບ ໂປ່ງໃສ, ຍຸຕິທຳ ແລະ ຫຼຸດຜ່ອນຄວາມສ່ຽງ ຕໍ່ລະບົບການເງິນ. ໃນການເຄື່ອນໄຫວວຽກງານດັ່ງກ່າວ ໄດ້ປະສານສົມທົບແໜ້ນ ແລະ ໄດ້ຮັບການຮ່ວມມືຈາກບັນດາຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ເປັນຢ່າງດີ ເພື່ອພັດທະນາຕະຫຼາດທຶນກໍ່ຄື ການພັດທະນາເສດຖະກິດຂອງ ສປປ ລາວ ໃຫ້ເຕີບໃຫຍ່ຂະຫຍາຍຕົວເທື່ອລະກ້າວ.

ສຳລັບໜຶ່ງປີທີ່ຜ່ານມາ ຄຄຊ ໄດ້ກຳນົດແນວທາງໃນການຄຸ້ມຄອງ, ພິຈາລະນາ ແລະ ຕິດຕາມກວດກາ ການເຄື່ອນໄຫວວຽກງານທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນຢ່າງໃກ້ຊິດ ໂດຍຜ່ານການພິຈາລະນາທາງເອກະສານ ແລະ ຜ່ານການຈັດກອງປະຊຸມ ຄຄຊ ຈຳນວນ 3 ຄັ້ງ ເພື່ອພິຈາລະນາຮັບຮອງເອົາບັນຫາທີ່ສຳຄັນຈຳນວນໜຶ່ງ ເປັນຕົ້ນແມ່ນ ການຂໍອອກຈຳໜ່າຍຮຸ້ນຂອງບໍລິສັດ 1 ແຫ່ງ, ພິຈາລະນາຮັບຮອງນິຕິກຳ 6 ສະບັບ, ຮັບຊາບການຄົ້ນຄວ້າກ່ຽວກັບການນຳເອົາຮຸ້ນຂອງບໍລິສັດຈົດທະບຽນໃນ ຕລຊລ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບໄທ (Dual Listing), ຮັບຊາບຄວາມຄືບໜ້າການກະກຽມຄວາມພ້ອມ ໃນການເຂົ້າເປັນສະມາຊິກສົມບູນ ຂອງອົງການຄຸ້ມຄອງຫລັກຊັບສາກົນ (IOSCO) ແລະ ການປັບປຸງເຄື່ອງໝາຍ (Logo) ຂອງ ຄຄຊ ພ້ອມທັງ ຮັບຊາບກ່ຽວກັບການເຄື່ອນໄຫວວຽກງານຂອງ ສຄຄຊ ແລະ ຕລຊລ ປະຈຳແຕ່ລະໄລຍະ. ນອກຈາກນີ້, ໃນປີ 2020 ໄດ້ປັບປຸງຄະນະກຳມະການ ຄຄຊ ຈຳນວນ 2 ທ່ານ. ປະຈຸບັນໂຄງປະກອບບຸກຄະລາກອນຂອງ ຄຄຊ ປະກອບມີ 13 ທ່ານ (ຕາມແຜນວາດ 1).

**ຮູບພາບ 1: ໂຄງປະກອບບຸກຄະລາກອນຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ**



ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ
ປະທານ ຄຄຊ
ເລີ່ມດຳລົງຕຳແໜ່ງ ປີ 2016



ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການ ທຫລ
ຮອງປະທານ ຄຄຊ ຜູ້ປະຈຳການ
ເລີ່ມດຳລົງຕຳແໜ່ງ ປີ 2018



ທ່ານ ບຸນເຫຼືອ ສິນໄຊວໍຣະວົງ
ຮອງລັດຖະມົນຕີ ກະຊວງການເງິນ
ຮອງປະທານ ຄຄຊ
ເລີ່ມດຳລົງຕຳແໜ່ງ ປີ 2020



ທ່ານ ສົມຈິດ ອິນທະມິດ
ຮອງລັດຖະມົນຕີ ກະຊວງການເງິນ
ກຳມະການ ຄຄຊ
ເລີ່ມດຳລົງຕຳແໜ່ງ ປີ 2015



ທ່ານ ບຸນສະຫວາດ ບຸບຜາ
ຮອງລັດຖະມົນຕີກະຊວງຍຸຕິທຳ
ກຳມະການ ຄຄຊ
ເລີ່ມດຳລົງຕຳແໜ່ງ ປີ 2011



ທ່ານ ຄຳມູນ ວິພົງໄຊ
ຮອງລັດຖະມົນຕີກະຊວງພາຍໃນ
ກຳມະການ ຄຄຊ
ເລີ່ມດຳລົງຕຳແໜ່ງ ປີ 2011



ທ່ານ ນ. ວັດທະນາ ດາລາລອຍ
ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ
ກຳມະການ ຄຄຊ
ເລີ່ມດຳລົງຕຳແໜ່ງ ປີ 2015



ທ່ານ ໄຊຊະນະ ໂຄດພູທອນ
ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ
ກຳມະການ ຄຄຊ
ເລີ່ມດຳລົງຕຳແໜ່ງ ປີ 2015



ທ່ານ ນ. ທິບພະກອນ ຈັນທະວົງສາ
ຮອງລັດຖະມົນຕີ,
ຮອງຫົວໜ້າຫ້ອງວ່າການ ສນຍ
ກຳມະການ ຄຄຊ
ເລີ່ມດຳລົງຕຳແໜ່ງ ປີ 2019



ທ່ານ ທັນຕາ ກອງຜາລີ
ຮອງປະທານກຳມາທິການແຜນການ,
ການເງິນ ແລະ ກວດສອບ, ສະພາແຫ່ງຊາດ
ກຳມະການ ຄຄຊ
ເລີ່ມດຳລົງຕຳແໜ່ງ ປີ 2017



ທ່ານ ມະນີໂສ ຊາມຸນຕີ
ຮອງປະທານກຳມາທິການເສດຖະກິດ,
ເຕັກໂນໂລຊີ ແລະ ສິ່ງແວດລ້ອມ,
ສະພາແຫ່ງຊາດ
ກຳມະການ ຄຄຊ
ເລີ່ມດຳລົງຕຳແໜ່ງ ປີ 2017



ທ່ານ ນ. ຄຳຈັນ ວົງແສນບູນ
ຮອງລັດຖະມົນຕີ ກະຊວງແຜນການ
ແລະ ການລົງທຶນ
ກຳມະການ ຄຄຊ
ເລີ່ມດຳລົງຕຳແໜ່ງ ປີ 2019



ທ່ານ ນາງ ສາຍສະໝອນ ຈັນທະຈັກ
ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ເລຂາ ຄຄຊ
ເລີ່ມດຳລົງຕຳແໜ່ງ ປີ 2015

### 1.2 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ)

ສຄຄຊ ມີສິດ ແລະ ໜ້າທີ່ໃນການຄົ້ນຄວ້າ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການ ແລະ ມະຕິຂອງ ຄຄຊ ກ່ຽວກັບການພັດທະນາວຽກງານຫຼັກຊັບ; ຄົ້ນຄວ້າສ້າງ ແລະ ປັບປຸງລະບຽບການ ເພື່ອສະເໜີ ຄຄຊ ພິຈາລະນາຮັບຮອງ; ຄົ້ນຄວ້າ ພິຈາລະນາ ການອະນຸຍາດ, ໂຈະ ແລະ ຍົກເລີກ ການອອກຈຳໜ່າຍຫຼັກຊັບ, ການສ້າງຕັ້ງກອງທຶນ ເພື່ອການລົງທຶນ, ຕະຫຼາດຫຼັກຊັບ, ສູນຮັບຝາກ ເພື່ອສະເໜີຕໍ່ ຄຄຊ ພິຈາລະນາ; ຄົ້ນຄວ້າ ພິຈາລະນາ ການອະນຸຍາດ ສ້າງຕັ້ງ ຫຼື ຮັບຮອງ ສະຖາບັນສື່ກາງດ້ານຫຼັກຊັບ ເພື່ອສະເໜີຕໍ່ ຄຄຊ ພິຈາລະນາ; ຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ; ຄຸ້ມຄອງ ຕິດຕາມ ກວດກາການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ, ສະຖາບັນສື່ກາງດ້ານຫຼັກຊັບ, ຕະຫຼາດຫຼັກຊັບ ແລະ ສູນຮັບຝາກ; ປະຕິບັດມາດຕະການຕໍ່ຜູ້ລະເມີດລະບຽບການກ່ຽວກັບຫຼັກຊັບ ຕາມກົດໝາຍ ແລະ ລະບຽບການທີ່ ຄຄຊ ວາງອອກໃນແຕ່ລະໄລຍະ.

ໃນໄລຍະໜຶ່ງປີຜ່ານມາ ສຄຄຊ ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດຂອງຕົນດ້ວຍຄວາມຮັບຜິດຊອບສູງ ກໍ່ຄື ການເປັນເສນາທິການໃຫ້ແກ່ ຄຄຊ ໃນການຄຸ້ມຄອງ, ຕິດຕາມ, ກວດກາວຽກງານຫຼັກຊັບ ບົນພື້ນຖານການປະສານສົມທົບ ແລະ ເຮັດວຽກຮ່ວມກັບບັນດາຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນໃຫ້ວຽກງານຄຸ້ມຄອງຫຼັກຊັບມີປະສິດທິພາບ ແລະ ມີຜົນສຳເລັດຕາມລະດັບຄາດໝາຍທີ່ໄດ້ກຳນົດໄວ້. ພ້ອມນີ້ ໃນປີຜ່ານມາ ສຄຄຊ ໄດ້ປັບປຸງການຈັດຕັ້ງ ຈຳນວນ 6 ຄັ້ງ ເພື່ອໃຫ້ແທດເໝາະກັບການຂະຫຍາຍຕົວຂອງວຽກງານໃນໄລຍະໃໝ່ ແລະ ຄວາມສາມາດຕົວຈິງຂອງພະນັກງານ. ຮອດປັດຈຸບັນ, ສຄຄຊ ມີພະນັກງານທັງໝົດ 42 ທ່ານ (ຍິງ 21 ທ່ານ) ໃນນີ້ ປະກອບດ້ວຍ ຄະນະ ສຄຄຊ 4 ທ່ານ (ຍິງ 2 ທ່ານ), ຄະນະພະແນກ 12 ທ່ານ (ຍິງ 4 ທ່ານ) ແລະ ວິຊາການ 26 ທ່ານ (ຍິງ 15 ທ່ານ).

## ຮູບພາບ 2: ໂຄງປະກອບບຸກຄະລາກອນ ຂອງ ສຄຄຊ



ທ່ານ ນ. ສາຍສະໝອນ ຈັນທະຈັກ
ຫົວໜ້າ ສຄຄຊ
ເລີ່ມດຳລົງຕຳແໜ່ງ ປີ 2014



ທ່ານ ສຽວສະຫວາດ ທິລະກຸນ
ຮອງຫົວໜ້າ ສຄຄຊ
ເລີ່ມດຳລົງຕຳແໜ່ງ ປີ 2017



ທ່ານ ນ. ວຽງດາລີ ສຸພານຸວົງ
ຮອງຫົວໜ້າ ສຄຄຊ
ເລີ່ມດຳລົງຕຳແໜ່ງ ປີ 2018



ທ່ານ ວຽງຄຳ ວັນສີລາລົມ
ຮອງຫົວໜ້າ ສຄຄຊ
ເລີ່ມດຳລົງຕຳແໜ່ງ ປີ 2019

## ແຜນວາດ 1: ໂຄງຮ່າງການຈັດຕັ້ງຂອງ ສຄຄຊ



ຮູບພາບ 3: ພະນັກງານ ສຄຄຊ



## 2. ຜົນສຳເລັດທີ່ພົ້ນເດັ່ນ ໃນປີ 2020

ປີ 2020 ເປັນປີທີ່ ຕະຫຼາດທຶນລາວ ກໍ່ຄື ຕະຫຼາດຫຼັກຊັບລາວ ໄດ້ຮັບການສ້າງຕັ້ງ ຄອບຮອບ 10 ປີ. ຄຄຊ ແລະ ສຄຄຊ ໂດຍສົມທົບກັບ ບັນດາຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໄດ້ສຳເລັດການຈັດພິທີສະຫຼຸບຜົນງານຕະຫຼາດທຶນລາວ ຄົບຮອບ 10 ປີ (2010-2020) ໃນເດືອນ ຕຸລາ 2020 ເພື່ອສະຫຼຸບຜົນງານພົ້ນເດັ່ນ ໃນໄລຍະຜ່ານມາ ແລະ ວາງວິໄສທັດໃນການພັດທະນາວຽກງານຕະຫຼາດທຶນໃນຕໍ່ໜ້າ ໃຫ້ສັງຄົມໄດ້ຮັບຮູ້ຢ່າງກວ້າງຂວາງ ພ້ອມທັງເປັນການຈາລຶກຄຸນງາມຄວາມດີຂອງບັນດາຜູ້ທີ່ໄດ້ປະກອບສ່ວນໃນການພັດທະນາວຽກງານຕະຫຼາດທຶນ ຂອງ ສປປ ລາວ ແລະ ສ້າງຂວັນກຳລັງໃຈໃຫ້ແກ່ພະນັກງານຜູ້ປະຕິບັດວຽກງານຕະຫຼາດທຶນ ຢ່າງເປັນຂະບວນຟົດຟື້ນ. ພ້ອມນີ້ ໃນພິທີດັ່ງກ່າວ ໄດ້ຈັດໃຫ້ມີງານວາງສະແດງຜົນງານຕະຫຼາດທຶນ ຂອງ 27 ພາກສ່ວນ ແລະ ຈັດສຳມະນາແບບຖາມ-ຕອບ ເຊິ່ງມີຜູ້ເຂົ້າຮ່ວມ ຫຼາຍກວ່າ 500 ເທື່ອຄົນ ຊຶ່ງເປັນຂະບວນການເຄື່ອນໄຫວທີ່ຄຶກຄື້ນ ແລະ ເຮັດໃຫ້ມວນຊົນໄດ້ມີຄວາມຮັບຮູ້ຕໍ່ວຽກງານຕະຫຼາດທຶນກ້ວາງຂວາງຍິ່ງຂຶ້ນ.

ຮູບພາບ 4: ບັນຍາກາດພິທີສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ










ພ້ອມດຽວກັນນີ້, ສຄຄຊ ໄດ້ເອົາໃຈໃສ່ເຄື່ອນໄຫວວຽກວິຊາສະເພາະຂອງຕົນຢ່າງຕັ້ງໜ້າ, ເປັນລະບົບ, ມີແຜນການຢ່າງລະອຽດ ແລະ ມີການຕິດຕາມການເຄື່ອນໄຫວຢ່າງໃກ້ຊິດ ເຮັດໃຫ້ສາມາດຍາດໄດ້ຜົນສຳເລັດໃນຫຼາຍດ້ານ ເຊິ່ງສາມາດສັງລວມໄດ້ດັ່ງນີ້:

## 2.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ

### 2.1.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ

ບົນພື້ນຖານສົມທົບກັບພາກສ່ວນກ່ຽວຂ້ອງ ສຄຄຊ ໄດ້ສຳເລັດການປັບປຸງກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ທ່ານ ປະທານປະເທດ ໄດ້ອອກດຳລັດປະກາດໃຊ້ຢ່າງເປັນທາງການໃນວັນທີ 14 ມັງກອນ 2020 ຊຶ່ງກົດໝາຍສະບັບປັບປຸງດັ່ງກ່າວ ໄດ້ເປັນບ່ອນອີງທີ່ສຳຄັນໃຫ້ແກ່ການເຄື່ອນໄຫວວຽກງານຫຼັກຊັບ ໃຫ້ມີຄວາມໜັກແໜ້ນ, ມີປະສິດທິພາບ, ໂປ່ງໃສ ແລະ ຍຸຕິທຳ, ສ້າງເງື່ອນໄຂສະດວກໃຫ້ບັນດາບໍລິສັດ ຫຼື ຫົວໜ່ວຍທຸລະກິດ ທັງພາກລັດ ແລະ ເອກະຊົນ ສາມາດລະດົມທຶນຜ່ານຕະຫຼາດທຶນ, ຊຸກຍູ້, ສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ແກ່ບຸກຄົນ ແລະ ນິຕິບຸກຄົນ ປະກອບສ່ວນລົງທຶນໃນຕະຫຼາດທຶນ ແລະ ເຮັດໃຫ້ນິຕິກຳຂອງ ສປປ ລາວ ສອດຄ່ອງກັບຫຼັກການຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO) ເທື່ອລະກ້າວ. ພ້ອມນີ້ ໄດ້ສຳເລັດການລົບລ້າງລັດຖະບັນຍັດເລກທີ 001/ປປທ, ລົງວັນທີ 28 ທັນວາ 2010 ວ່າດ້ວຍການກຳນົດອັດຕາອາກອນກຳໄລ ແລະ ຄ່າທຳນຽມ ສຳລັບການດຳເນີນທຸລະກິດໃນຕະຫຼາດຫຼັກຊັບ. ນອກຈາກນີ້, ກໍ່ໄດ້ສຳເລັດການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ຈຳນວນ 14 ສະບັບ

(ສ້າງໃໝ່ 10 ສະບັບ ແລະ ປັບປຸງ 4 ສະບັບ) ໂດຍໄດ້ກໍານົດນະໂຍບາຍ, ຫຼັກການ ແລະ ລະບຽບການ ສໍາລັບຂະແໜງຕະຫຼາດທຶນ ເພື່ອຫຼຸດຜ່ອນຜົນກະທົບຈາກລະບາດພະຍາດ COVID-19 ໃຫ້ບັນດາຜູ້ມີສ່ວນຮ່ວມໃນຕະຫຼາດທຶນ, ຄຸ້ມຄອງການເອົາຮຸ້ນເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ (DR), ຕີລາຄາຄວາມໝາຍຂອງການຊື້-ຂາຍຮຸ້ນຂອງພະນັກງານ-ລັດຖະກອນໃນຕະຫຼາດຫຼັກຊັບລາວ, ປັບຫຼຸດຄ່າທໍານຽມການຊື້-ຂາຍ ແລະ ການໂອນຮຸ້ນຈົດທະບຽນໃນ ຕະຫຼາດຫຼັກຊັບລາວ, ຄຸ້ມຄອງຜູ້ລົງທຶນພາຍໃນ ທີ່ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ເພື່ອສ້າງເງື່ອນໄຂໃນການຊຸກຍູ້ ແລະ ຄຸ້ມຄອງການເຄື່ອນໄຫວຊື້-ຂາຍຮຸ້ນຂອງຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ແລະ ອື່ນໆ.

**ຕາຕະລາງທີ 1: ສັງລວມລາຍຊື່ນິຕິກໍາ ທີ່ສໍາເລັດໃນປີ 2020**

| ລໍາດັບ | ລາຍຊື່ນິຕິກໍາ ທີ່ສໍາເລັດໃນປີ 2020 |
|---|---|
| 1 | ຂໍ້ຕົກລົງ ວ່າດ້ວຍການເອົາຮຸ້ນເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ (DR) (ສ້າງໃໝ່) |
| 2 | ຂໍ້ຕົກລົງ ວ່າດ້ວຍການກໍານົດອັດຕາຄ່າທໍານຽມການຊື້-ຂາຍ ແລະ ການໂອນຮຸ້ນຈົດທະບຽນ ໃນຕະຫຼາດຫຼັກຊັບລາວ (ສ້າງໃໝ່) |
| 3 | ຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງລັງເງິນໂຄງການສົ່ງເສີມຄວາມຮູ້ຕະຫຼາດທຶນລາວ (ສ້າງໃໝ່) |
| 4 | ຂໍ້ຕົກລົງວ່າດ້ວຍການເພີ່ມອັດຕາສ່ວນການຖືຄອງຮຸ້ນຂອງຜູ້ລົງທຶນພາຍໃນ ແລະ ຕ່າງປະເທດໃນທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ສະບັບປັບປຸງ) |
| 5 | ແຈ້ງການກ່ຽວກັບນະໂຍບາຍ ແລະ ມາດຕະການຈັດຕັ້ງປະຕິບັດສໍາລັບຂະແໜງຕະຫຼາດທຶນ ເພື່ອຫຼຸດຜ່ອນຜົນກະທົບຈາກລະບາດພະຍາດ COVID-19 ໃຫ້ບັນດາຜູ້ມີສ່ວນຮ່ວມໃນຕະຫຼາດທຶນ (ສ້າງໃໝ່) |
| 6 | ແຈ້ງການເລື່ອງ ການຕົກລົງ ແລະ ຊີ້ນໍາຂອງຂັ້ນເທິງ ກ່ຽວກັບການຊື້-ຂາຍຮຸ້ນຂອງພະນັກງານ-ລັດຖະກອນໃນຕະຫຼາດຫຼັກຊັບລາວ (ສ້າງໃໝ່) |
| 7 | ແຈ້ງການເລື່ອງ ການປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) (ສະບັບປັບປຸງ) |
| 8 | ແຈ້ງການໃຫ້ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ ເພື່ອແຕ່ງຕັ້ງບໍລິສັດຫຼັກຊັບເພື່ອເປັນທີ່ປຶກສາທາງດ້ານການເງິນ (ສ້າງໃໝ່) |
| 9 | ແຈ້ງການເຖິງຕະຫຼາດຫຼັກຊັບໃຫ້ສະໜອງຂໍ້ມູນເອກະສານລາຍງານການເງິນໃນຮູບແບບ Excel File (ສ້າງໃໝ່) |
| 10 | ຄໍາແນະນໍາວ່າດ້ວຍກົນໄກການຈັດຕັ້ງປະຕິບັດມາດຕະການທາງບໍລິຫານໃນຂົງເຂດວຽກງານຫຼັກຊັບ (ສ້າງໃໝ່) |
| 11 | ຄໍາແນະນໍາວ່າດ້ວຍການສ້າງ ແລະ ປັບປຸງນິຕິກໍາ ຂອງອົງການຄຸ້ມຄອງວຽກງານຫຼັກຊັບ (ສະບັບປັບປຸງ) |
| 12 | ຄໍາແນະນໍາວ່າດ້ວຍການນໍາໃຊ້ຊ່ອງທາງການຮ້ອງຟ້ອງ ຫຼື ແຈ້ງຄວາມຈາກສັງຄົມໃນຂົງເຂດວຽກງານຫຼັກຊັບ (ສະບັບປັບປຸງ) |
| 13 | ຄໍາແນະນໍາວ່າດ້ວຍກົນໄກການເປີດສືບສວນ-ສອບສວນກ່ຽວກັບວຽກງານຫຼັກຊັບ (ສ້າງໃໝ່) |
| 14 | ຄໍາແນະນໍາວ່າດ້ວຍການຄຸ້ມຄອງ ແລະ ການນໍາໃຊ້ຫ້ອງສະໝຸດຂອງ ສຄຄຊ (ສ້າງໃໝ່). |

ຮອດປັດຈຸບັນ, ນິຕິກໍາໃຕ້ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມີທັງໝົດຈໍານວນ 75 ສະບັບ.

### 2.1.2 ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ

ເພື່ອສືບຕໍ່ດຶງດູດ ແລະ ຊຸກຍູ້ໃຫ້ມີການເຂົ້າຮ່ວມ ແລະ ປະກອບສ່ວນໃນວຽກງານຕະຫລາດທຶນ, ລັດຖະບານ ໄດ້ຫຼຸດອັດຕາອາກອນກໍາໄລ ຈາກ 20% ມາເປັນ 13% ເປັນເວລາ 4 ປີ ຕໍ່ເນື່ອງໃຫ້ແກ່ບໍລິສັດຈົດທະບຽນ ຊຶ່ງມີຜົນບັງຄັບໃຊ້ໃນປີ 2020 ເປັນຕົ້ນໄປ ແລະ ໄດ້ຍົກເວັ້ນຄ່າທໍານຽມ ຊື້-ຂາຍຫຼັກຊັບ ໃນອັດຕາ 0,3% ໃນສ່ວນຂອງລັດຖະບານ. ພ້ອມນີ້ ເພື່ອສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ລັດວິສາຫະກິດ, ລັດຖະບານໄດ້ເຫັນດີໃຫ້ ລັດວິສາຫະກິດ ນໍາໃຊ້ຄັງ

ຂະຫຍາຍການຜະລິດ ແລະ ຄັງສະສົມຕາມລະບຽບການຂອງວິສາຫະກິດ ເພື່ອປັບປຸງຄວາມເຂັ້ມແຂງຂອງຕົນ ເປັນຕົ້ນ ດ້ານການຈັດຕັ້ງ, ການດຳເນີນທຸລະກິດ ແລະ ການຄຸ້ມຄອງບໍລິຫານ ແນໃສ່ໃຫ້ລັດວິສາຫະກິດ ມີຄວາມພ້ອມໃນການ ລະດົມທຶນຜ່ານຕະຫຼາດທຶນ.

## 2.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

### ❖ ການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ

ໃນປີ 2020, ສຄຄຊ ໄດ້ອະນຸຍາດໃຫ້ບໍລິສັດ 1 ແຫ່ງ ລະດົມທຶນຜ່ານຕະຫຼາດທຶນດ້ວຍການອອກຈຳໜ່າຍຮຸ້ນໃຫ້ ແກ່ມວນຊົນຄັ້ງທຳອິດ (ບໍລິສັດ ເອເນໂກ້ ໄດນາມິກ ມະຫາຊົນ ເຊິ່ງການອອກຈຳໜ່າຍດັ່ງກ່າວບໍ່ສຳເລັດ) ແລະ ໄດ້ຮັບຮູ້ ການອອກຈຳໜ່າຍຮຸ້ນກູ້ ຢູ່ປະເທດໄທ ໃຫ້ແກ່ບໍລິສັດ ໄຟຟ້າ-ນ້ຳງື່ມ 2 ຈຳກັດ ຈຳນວນ 2 ຄັ້ງ ເຊິ່ງສາມາດລະດົມທຶນໄດ້ ທັງໝົດ 1.600 ລ້ານບາດ ຫຼື ທຽບເທົ່າ 494 ຕື້ກີບ ຫຼຸດລົງ 69,51% ເມື່ອທຽບກັບປີ 2019.

**ຕາຕະລາງທີ 2: ສັງລວມການລະດົມທຶນຢູ່ພາຍໃນ ແລະ ຢູ່ຕ່າງປະເທດ ແຕ່ປີ 2010-2020.**

ຫົວໜ່ວຍ: ຕື້ກີບ

| ປີ | 2010 | 2012 | 2013 | 2014 | 2015 | 2016 | 2017 | 2018 | 2019 | 2020 | ລວມ |
|---|---|---|---|---|---|---|---|---|---|---|---|
| ລະດົມທຶນພາຍໃນ | 1.237 | 1.611 | 40 | 240 | 2.832 | - | 458 | 69 | 332 | - | 6.819 |
| ລະດົມທຶນຢູ່ຕ່າງປະເທດ | - | - | - | 1.625 | - | 2.558 | 1.500 | 5.349 | 1.620 | 494 | 13.146 |
| **ລວມ** | **1.237** | **1.611** | **40** | **1.865** | **2.832** | **2.558** | **1.958** | **5.418** | **1.952** | **494** | **19.965** |

**ແຜນວາດ 2: ຍອດສະສົມການລະດົມທຶນ ຢູ່ພາຍໃນ ແລະ ຢູ່ຕ່າງປະເທດ ແຕ່ປີ 2010-2019**




ໂດຍລວມແລ້ວ, ນັບແຕ່ປີ 2010-2020 ຍອດສະສົມການລະດົມທຶນດ້ວຍການອອກຈຳໜ່າຍຫຼັກຊັບ ຢູ່ພາຍໃນ ແລະ ຢູ່ຕ່າງປະເທດ ລວມທັງໝົດ 19.965 ຕື້ກີບ ກວມເອົາ 12,17% ຂອງ GDP. ທຶນທີ່ລະດົມໄດ້ດັ່ງກ່າວ ວິສາຫະກິດໄດ້ນຳໃຊ້ເຂົ້າໃນການຂະຫຍາຍທຸລະກິດ ເປັນຕົ້ນແມ່ນ ສ້າງເຂື່ອນໄຟຟ້າ, ສ້າງປ້ຳນ້ຳມັນ, ສູນການຄ້າ, ຜະລິດຊີມັງ, ຜະລິດນ້ຳມັນປາມ, ຂະຫຍາຍທຸລະກິດເຊົ່າສິນເຊື່ອ, ນຳໃຊ້ເປັນທຶນໝູນວຽນໃນການເຄື່ອນໄຫວທຸລະກິດ ແລະ ອື່ນໆ.

ຮອດທ້າຍປີ 2020, ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ມີທັງໝົດ 11 ບໍລິສັດ (ຕົວເລກຄົງທີ່ຈາກປີຜ່ານມາ). (ລາຍຊື່ບັນດາບໍລິສັດຈົດທະບຽນ ຢູ່ໃນເອກະສານຊ້ອນທ້າຍ 1)

ຄຽງຄູ່ກັນນີ້, ເພື່ອຊຸກຍູ້ສົ່ງເສີມບໍລິສັດເປົ້າໝາຍອອກຈໍາໜ່າຍຫຼັກຊັບ ແລະ ເຂົ້າຈົດທະບຽນໃນ ຕລຊລ, ສຄຄຊ ໄດ້ສົມທົບກັບ ກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງ ຄັດເລືອກເອົາວິສາຫະກິດທີ່ລັດລົງທຶນຈໍານວນໜຶ່ງ ເພື່ອປະເມີນ ແລະ ກະກຽມຄວາມພ້ອມຮອບດ້ານໃນການອອກຈໍາໜ່າຍຫຼັກຊັບ ເຊິ່ງລັດຖະບານໄດ້ເຫັນດີໃຫ້ນໍາໃຊ້ຄັງຕ່າງໆຂອງວິສາຫະກິດມາສ້າງຄວາມເຂັ້ມແຂງໃຫ້ແກ່ວິສາຫະກິດທີ່ລັດລົງທຶນ ກໍລະນີມີຄວາມຕ້ອງການຢາກເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ.

- ❖ **ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ**

ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງ ແລະ ຕິດຕາມການເຄື່ອນໄຫວຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ໃນແຕ່ລະໄລຍະຢ່າງໃກ້ຊິດ ໂດຍສະເພາະ ແມ່ນຕິດຕາມການລາຍງານ ແລະ ການເປີດເຜີຍຂໍ້ມູນ ບົດລາຍງານການດໍາເນີນທຸລະກິດ ແລະ ເອກະສານລາຍງານການເງິນ, ການຈັດຕັ້ງກອງປະຊຸມຜູ້ຖືຮຸ້ນ, ການຈ່າຍເງິນປັນຜົນ, ການນໍາໃຊ້ທຶນທີ່ລະດົມໄດ້ ແລະ ອື່ນໆ ຢ່າງເປັນປົກກະຕິ. ພ້ອມທັງ ໄດ້ສໍາເລັດການຄົ້ນຄວ້າກ່ຽວກັບນະໂຍບາຍການຈ່າຍເງິນປັນຜົນຂອງບໍລິສັດຈົດທະບຽນ.

ເພື່ອຮັບປະກັນໃຫ້ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ສາມາດສ້າງເອກະສານລາຍງານການເງິນຂອງຕົນໃຫ້ສອດຄ່ອງກັບມາດຕະຖານສາກົນ, ສຄຄຊ ໂດຍການປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ໄດ້ສໍາເລັດການທົບທວນໄລຍະຂ້າມຜ່ານສູ່ IFRS ຄືນໃໝ່ ເພື່ອຮັບປະກັນການຈັດຕັ້ງປະຕິບັດ ຢ່າງມີປະສິດທິພາບ ໂດຍໄດ້ອອກແຈ້ງການ ກ່ຽວກັບການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ແລະ ໄດ້ສົມທົບກັບພາກສ່ວນກ່ຽວຂ້ອງຄົ້ນຄວ້າສ້າງແຜນປະຕິບັດງານ, ແຜນຂ້າມຜ່ານ ແລະ ຄໍາແນະນໍາ ຈັດຕັ້ງປະຕິບັດ IFRS ສໍາລັບຂະແໜງການຫຼັກຊັບ. ພ້ອມນີ້ ສຄຄຊ ກໍໄດ້ເອົາໃຈໃສ່ ການພັດທະນາວຽກງານການຄຸ້ມຄອງບໍລິຫານສໍາລັບບໍລິສັດຈົດທະບຽນ ຊຶ່ງພາຍຫຼັງສໍາເລັດການສ້າງຄໍາແນະນໍາກ່ຽວກັບການຄຸ້ມຄອງບໍລິຫານສໍາລັບບໍລິສັດຈົດທະບຽນ (CG Guideline) ໃຫ້ສອດຄ່ອງກັບມາດຕະຖານຂອງບັນດາປະເທດໃນພາກພື້ນ ແລະ ສາກົນ ຍິ່ງຂຶ້ນ ໂດຍໄດ້ກໍານົດຫຼັກການຄຸ້ມຄອງບໍລິຫານທີ່ຈໍາເປັນແລ້ວ, ສຄຄຊ ໄດ້ດໍາເນີນການເຜີຍແຜ່ຄໍາແນະນໍາດັ່ງກ່າວໃຫ້ບໍລິສັດຈົດທະບຽນຮັບຊາບ ແລະ ເຂົ້າໃຈ ພ້ອມທັງ ໄດ້ສໍາເລັດການສໍາຫຼວດການກະກຽມຄວາມພ້ອມໃນການຈັດຕັ້ງປະຕິບັດຄໍາແນະນໍາດັ່ງກ່າວຂອງ ບໍລິສັດຈົດທະບຽນ. ຜ່ານການເຜີຍແຜ່ ແລະ ສໍາຫຼວດດັ່ງກ່າວ ເຫັນວ່າ ຜູ້ບໍລິຫານ ແລະ ພະນັກງານທີ່ກ່ຽວຂ້ອງຂອງບໍລິສັດຈົດທະບຽນ ໄດ້ຄ່ອຍຮັບຮູ້ ແລະ ເຂົ້າໃຈ ພ້ອມທັງ ເຫັນຄວາມສໍາຄັນຂອງວຽກງານ CG ຫຼາຍຍິ່ງຂຶ້ນ. ຄຽງຄູ່ກັນນີ້ ໄດ້ສໍາເລັດການຮ່າງບັດປະເມີນການຈັດຕັ້ງປະຕິບັດຄໍາແນະນໍາວ່າດ້ວຍການຄຸ້ມຄອງບໍລິຫານສໍາລັບບໍລິສັດຈົດທະບຽນ (Lao CG Scorecard) ເບື້ອງຕົ້ນ ເພື່ອເປັນເຄື່ອງມືໃນການຕິດຕາມກວດກາການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານຂອງບໍລິສັດຈົດທະບຽນ.

## 2.3 ການຄຸ້ມຄອງຕະຫຼາດຫຼັກຊັບລາວ (ຕລຊລ) ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ

- ❖ **ການຄຸ້ມຄອງຕະຫຼາດຫຼັກຊັບ**

ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງຕະຫຼາດຫຼັກຊັບລາວຢ່າງໃກ້ຊິດ ດ້ວຍການກວດກາຕາມເອກະສານປະຈໍາເດືອນ, ໄຕມາດ, ຫົກເດືອນ ແລະ ປີ ຢ່າງເປັນປົກກະຕິ ແລະ ລົງກວດກາກັບທີ່ ປະຈໍາປີ 2020 ຈໍານວນ 1 ຄັ້ງ ໂດຍລົງເລິກ ລະບົບການຊື້-ຂາຍ, ການເກັບຮັກສາຂໍ້ມູນ, ເອກະສານລາຍງານການເງິນ ແລະ ການເຄື່ອນໄຫວວຽກງານຂອງ ຕລຊລ ເຊິ່ງຜ່ານການກວດກາຕົວຈິງ ເຫັນວ່າ ການເຄື່ອນໄຫວຂອງ ຕລຊລ ສອດຄ່ອງກັບ

ລະບຽບການ. ຕິດພັນກັບແຜນງານຂະຫຍາຍ ແລະ ປົກປ້ອງຜູ້ລົງທຶນ, ໄດ້ສົມທົບກັບພາກສ່ວນກ່ຽວຂ້ອງ ສຳເລັດການຕີຄວາມໝາຍຂອງຄຳວ່າ "ຂາຮຸ້ນ" ຊຶ່ງພະນັກງານ-ລັດຖະກອນ ສາມາດຊື້-ຂາຍຫຼັກຊັບ ໃນ ຕລຊລ ໄດ້ ໂດຍບໍ່ຂັດກັບມາດຕາ 82 ຂໍ້ 4 ຂອງກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ; ສຳເລັດການຄົ້ນຄວ້າຮູບແບບຂອງການຄຸ້ມຄອງຜູ້ລົງທຶນພາຍໃນ ທີ່ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ເພື່ອສ້າງເງື່ອນໄຂໃນການຊຸກຍູ້ ແລະ ຄຸ້ມຄອງການເຄື່ອນໄຫວຊື້-ຂາຍຮຸ້ນຂອງຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ. ຄຽງຄູ່ກັນນີ້, ກໍ່ໄດ້ອອກແຈ້ງການກ່ຽວກັບການປັບຫຼຸດຄ່າທຳນຽມການຊື້-ຂາຍ ແລະ ການໂອນຮຸ້ນຈົດທະບຽນ ໃນ ຕລຊລ. ຕິດພັນກັບແຜນງານພັດທະນາລະບົບເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ ແມ່ນໄດ້ປະສານສົມທົບກັບ ຕລຊລ ໃນການສຶກສາຄົ້ນຄວ້າການຕິດຕາມການຊື້-ຂາຍທີ່ບໍ່ຍຸຕິທຳ (Market Surveillance) ພ້ອມທັງຊຸກຍູ້ ຕລຊລ ໃນການສ້າງລະບົບດັ່ງກ່າວ.

ຄຽງຄູ່ກັນນີ້, ເພື່ອສ້າງຜະລິດຕະພັນໃຫ້ແກ່ ຕລຊລ ໃຫ້ມີຄວາມຫຼາກຫຼາຍ, ສຄຄຊ ໄດ້ສຳເລັດຂັ້ນພື້ນຖານການຄົ້ນຄວ້າສິ່ງອຸດຕັນການອອກຈຳໜ່າຍຮຸ້ນກູ້ ແລະ ສິ່ງຈູງໃຈໃຫ້ແກ່ບັນດາບໍລິສັດທີ່ຈະອອກຈຳໜ່າຍຫຼັກຊັບປະເພດດັ່ງກ່າວ ແລະ ໄດ້ສຶກສາຮູບແບບ Single Submission Form ຂອງພັນທະບັດອາຊຽນ. ນອກຈາກນີ້, ສຄຄຊ ຍັງໄດ້ສຳເລັດການຄົ້ນຄວ້າສ້າງຜະລິດຕະພັນໃໝ່ ຄື: ການເອົາຮຸ້ນເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ (Depository Reciept ຫຼື DR) ເພື່ອຊ່ວຍສ້າງສະພາບຄ່ອງໃຫ້ແກ່ຕະຫຼາດຫຼັກຊັບລາວ ແລະ ຜູ້ຖືຄອງຮຸ້ນ ພ້ອມທັງ ໄດ້ຊຸກຍູ້ໃຫ້ ຕລຊລ ກະກຽມສ້າງລະບຽບການ ແລະ ລະບົບເພື່ອຮອງຮັບການຈົດທະບຽນໜ່ວຍລົງທຶນ ແລະ ຮຸ້ນອ້າງອີງ ເພື່ອອອກໃບຢັ້ງຢືນສິດດັ່ງກ່າວ. ນອກນັ້ນ, ໄດ້ສຳເລັດເບື້ອງຕົ້ນການຄົ້ນຄວ້າກົນໄກການສ້າງກະດານຊື້-ຂາຍຮຸ້ນ ສຳລັບວິສາຫະກິດທີ່ບໍ່ໄດ້ເງື່ອນໄຂຈົດທະບຽນໃນກະດານຫຼັກ.

- ***ການຄຸ້ມຄອງການເຄື່ອນໄຫວໃນຕະຫຼາດຂັ້ນສອງ***

ດັດຊະນີຕະຫຼາດຫຼັກຊັບລາວ ໃນທ້າຍປີນີ້ ປິດຢູ່ທີ່ 598,70 ຈຸດ ຫຼຸດລົງ 17,77% ທຽບໃສ່ດັດຊະນີຂອງ ທ້າຍປີ 2019 ທີ່ຜ່ານມາ ໂດຍມີມູນຄ່າການຊື້-ຂາຍທັງໝົດ 72,89 ຕື້ກີບ ຫຼຸດລົງ 1,52% ເມື່ອທຽບໃສ່ປີ 2019 ໃນນັ້ນເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 58,67%. ສາເຫດທີ່ດັດຊະນີຕະຫຼາດຫຼັກຊັບປັບຕົວຫຼຸດລົງ ເມື່ອທຽບກັບປີຜ່ານມາ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ EDL-GEN, LCC, PTL. ການປັບຕົວຫຼຸດລົງຂອງລາຄາຮຸ້ນດັ່ງກ່າວ ສາເຫດຕົ້ນຕໍແມ່ນເນື່ອງມາຈາກສະພາບເສດຖະກິດໂດຍລວມບໍ່ເອື້ອອຳນວຍຕໍ່ການຂະຫຍາຍຕົວຂອງບໍລິສັດ ແລະ ຈາກປັດໄຈພາຍໃນຂອງບໍລິສັດຈົດທະບຽນເອງ ທີ່ມີການຄຸ້ມຄອງບໍລິຫານລາຍຮັບ-ລາຍຈ່າຍ ແລະ ຄວາມສ່ຽງບໍ່ໄດ້ດີເທົ່າທີ່ຄວນ ເຊິ່ງສົ່ງຜົນໃຫ້ຜົນການດຳເນີນງານຫຼຸດລົງ ແລະ ຂາດທຶນໃນບາງບໍລິສັດ ເຊິ່ງບໍ່ສາມາດຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນໄດ້. ຕໍ່ກັບສະພາບການດັ່ງກ່າວ, ຜູ້ລົງທຶນໄດ້ມີການເທຂາຍຮຸ້ນຂອງບໍລິສັດ ເຮັດໃຫ້ລາຄາຮຸ້ນປັບຕົວຫຼຸດຫຼຸດລົງ. ນອກຈາກນີ້, ບາງບໍລິສັດຈົດທະບຽນກໍ່ບໍ່ສາມາດເປີດເຜີຍຂໍ້ມູນເອກະສານລາຍງານການເງິນທັນຕາມກຳນົດເວລາເຊິ່ງສົ່ງຜົນກະທົບດ້ານລົບຕໍ່ຄວາມເຊື່ອໝັ້ນຂອງຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ.

ຮອດທ້າຍປີ 2020 ບັນຊີຜູ້ລົງທຶນພາຍໃນປະເທດ ມີຈຳນວນ 12.618 ບັນຊີ (ບຸກຄົນ 12.559 ແລະ ສະຖາບັນ 59 ) ແລະ ຕ່າງປະເທດ ຈຳນວນ 3.406 ບັນຊີ (ບຸກຄົນ 3.329 ແລະ ສະຖາບັນ 77 ) ເພີ່ມຂຶ້ນ 5,05% ແລະ 1,92% ທຽບໃສ່ປີ 2019 ຕາມລຳດັບ.

### ແຜນວາດ 3: ມູນຄ່າການຊື້-ຂາຍຮຸ້ນ ທຽບກັບ ດັດຊະນີຂອງ ຕລຊລ (11 ມັງກອນ 2011 – 28 ທັນວາ 2020)

ຫົວໜ່ວຍ: 1 ລ້ານກີບ




*ສາເຫດ ຍ້ອນມີການຊື້-ຂາຍຮຸ້ນລ່ອດໃຫຍ່ ຂອງບໍລິສັດ LWPC.

### ແຜນວາດ 4: ການເໜັງຕີງຂອງລາຄາຮຸ້ນ 11 ບໍລິສັດ ໃນ ຕລຊລ (11 ມັງກອນ 2011 – 28 ທັນວາ 2020)

ຫົວໜ່ວຍ: ກີບ



### 2.4 ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ

ໃນການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ໂດຍສະເພາະບໍລິສັດຫຼັກຊັບ (ປັດຈຸບັນມີ 4 ບໍລິສັດ), ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງ, ຕິດຕາມ ກວດກາ ຫົວໜ່ວຍດັ່ງກ່າວ ຢ່າງເປັນປົກກະຕິ ດ້ວຍຮູບການກວດກາທາງເອກະສານປະຈຳເດືອນ, ໄຕມາດ, 6 ເດືອນ ແລະ ປີ ແລະ ລົງກວດກາກັບທີ່ປະຈຳປີ 2020 ຈຳນວນ 1 ຄັ້ງຕໍ່ບໍລິສັດ ເຊິ່ງຜ່ານການກວດກາ ເຫັນວ່າ ມີການເຄື່ອນໄຫວຕາມພາລະບົດບາດຂອງຕົນເປັນຢ່າງດີ ແລະ ບໍ່ມີປະກົດການຫຍໍ້ທໍ້ທີ່ຮ້າຍແຮງເກີດຂຶ້ນ. ນອກຈາກນີ້, ໃນປີ 2020 ສຄຄຊ ໄດ້ສຳເລັດການສ້າງປຶ້ມຄູ່ມື ແລະ ເລີ່ມຈັດຕັ້ງປະຕິບັດຫຼັກການຄຸ້ມຄອງບໍລິສັດຫຼັກຊັບ ຕາມແບບຕີລາຄາຄວາມສ່ຽງ (Risk-Based Supervision) ພ້ອມທັງ ຊຸກຍູ້ບໍລິສັດຫຼັກຊັບ 3 ແຫ່ງ ໃນການສ້າງແຜນແກ້ໄຂຂໍ້ຄົງຄ້າງ ກ່ຽວກັບ ການຈັດຕັ້ງປະຕິບັດພາລະບົດບາດຂອງຕົນຕາມກົດໝາຍ Anti-money laundering (AML).

ສຳລັບການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບອື່ນ ທີ່ໄດ້ຮັບຮອງຈາກ ສຄຄຊ ໃຫ້ເຂົ້າມາເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ (ປັດຈຸບັນມີ ທັງໝົດ 17 ບໍລິສັດ ຄື: ບໍລິສັດກວດສອບ 4 ແຫ່ງ, ບໍລິສັດປະເມີນມູນຄ່າຊັບສິນ ຈຳນວນ 9 ແຫ່ງ, ທະນາຄານດູແລຊັບສິນ 3 ແຫ່ງ ແລະ ບໍລິສັດຈັດອັນດັບຄວາມໜ້າເຊື່ອຖື 1 ແຫ່ງ), ສຄຄຊ ໄດ້ເອົາໃຈໃສ່ຕິດຕາມກວດກາບັນດາສະຖາບັນດັ່ງກ່າວຜ່ານທາງເອກະສານ ຢ່າງເປັນປົກກະຕິ ເຊິ່ງຜ່ານການຕິດຕາມກວດກາເຫັນວ່າ ມີການເຄື່ອນໄຫວຕາມພາລະບົດບາດຂອງຕົນເປັນຢ່າງດີ. ພ້ອມນີ້, ໃນປີ 2020 ໄດ້ສຳເລັດການຕໍ່ອາຍຸໃບຮັບຮອງບໍລິສັດກວດສອບ 2 ແຫ່ງ, ບໍລິສັດ ປະເມີນມູນຄ່າຊັບສິນ 1 ແຫ່ງ. ພ້ອມດຽວກັນນີ້, ກໍ່ໄດ້ຊຸກຍູ້ບໍລິສັດທີ່ໄດ້ເງື່ອນໄຂ ເພື່ອກະກຽມຄວາມພ້ອມໃນການສ້າງຕັ້ງບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ແລະ ປະຈຸບັນກໍ່ມີບໍລິສັດຈຳນວນໜຶ່ງທີ່ໃຫ້ຄວາມສົນໃຈ. (ລາຍຊື່ລະອຽດຢູ່ໃນເອກະສານຊ້ອນທ້າຍ 2).

ນອກຈາກນີ້, ສຄຄຊ ໄດ້ຖືສຳຄັນການຄຸ້ມຄອງ ແລະ ພັດທະນານັກວິຊາຊີບ ທີ່ໄດ້ຮັບການຮັບຮອງຈາກ ສຄຄຊ ໃຫ້ເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ເຊິ່ງປັດຈຸບັນມີທັງໝົດ 71 ຄົນ ປະກອບມີ: ນັກວິຊາຊີບທຸລະກິດຫຼັກຊັບ 33 ຄົນ (ທີ່ປຶກສາທາງດ້ານການເງິນ 11 ຄົນ, ນາຍໜ້າຊື້-ຂາຍຫຼັກຊັບ 8 ຄົນ, ຜູ້ວິເຄາະ 3 ຄົນ, ຜູ້ຄ້າຫຼັກຊັບ 3 ຄົນ ແລະ ຜູ້ຊ່ວຍນາຍໜ້າຊື້-ຂາຍຫຼັກຊັບ 8 ຄົນ), ນັກວິຊາຊີບກວດສອບ 17 ຄົນ ແລະ ນັກວິຊາຊີບປະເມີນມູນຄ່າຊັບສິນ 23 ຄົນ. ໃນການຄຸ້ມຄອງນັກວິຊາຊີບດັ່ງກ່າວ ອັນພົ້ນເດັ່ນໃນປີຜ່ານມາ ແມ່ນໄດ້ສຳເລັດການຮັບຮອງ ແລະ ຕໍ່ອາຍຸໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ປະເພດນາຍໜ້າຊື້-ຂາຍຫຼັກຊັບ 1 ຄົນ, ຜູ້ຊ່ວຍນາຍໜ້າຊື້-ຂາຍຫຼັກຊັບ 4 ຄົນ ແລະ ທີ່ປຶກສາທາງດ້ານການເງິນ 2 ຄົນ ແລະ ຮັບຮອງຜູ້ປະເມີນມູນຄ່າຊັບສິນ 2 ຄົນ ເພື່ອເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ.

### 2.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ

ອີງຕາມຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ເລກທີ 02/ນຍ[1] ກ່ຽວກັບການປັບປຸງຕົວຊີ້ວັດຂອງບົດລາຍງານການດຳເນີນທຸລະກິດ ຂອງ ສປປ ລາວ, ໃນໄລຍະຜ່ານມາ ສຄຄຊ ໄດ້ເອົາໃຈໃສ່ສ້າງ ແລະ ປັບປຸງນິຕິກຳໃນຂົງເຂດວຽກງານຫຼັກຊັບ ທີ່ກ່ຽວຂ້ອງກັບການປັບປຸງຕົວຊີ້ວັດດັ່ງກ່າວ ເປັນຕົ້ນ ຂໍ້ຕົກລົງວ່າດ້ວຍ ສະພາບໍລິຫານ, ລາຍການກ່ຽວພັນ, ລາຍງານ ແລະ ເປີດເຜີຍຂໍ້ມູນ, ຄຳແນະນຳກ່ຽວກັບການຈັດກອງປະຊຸມຜູ້ຖືຮຸ້ນ ແລະ ລະບຽບການອື່ນໆ. ນອກນັ້ນ ຍັງໄດ້ປະກອບສ່ວນໃນການປັບປຸງກົດໝາຍວ່າດ້ວຍວິສາຫະກິດ ຮ່ວມກັບກະຊວງ ອຸດສະຫະກຳ ແລະ ການຄ້າ. ເຖິງວ່ານິຕິ

[1] ຄຳສັ່ງເລກທີ 02/ນຍ: ຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ ສະບັບເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018.

ກຳຫຼາຍອັນໄດ້ຮັບການສ້າງ ແລະ ປັບປຸງແລ້ວກໍ່ຕາມ ແຕ່ຜົນການປະເມີນຂອງທະນາຄານໂລກ ກ່ຽວກັບຕົວຊີ້ວັດການປົກປ້ອງຜູ້ລົງທຶນລາຍຍ່ອຍ ຍັງບໍ່ທັນໄດ້ຮັບການປັບປຸງໃຫ້ດີຂຶ້ນ ເນື່ອງຈາກການປັບປຸງນິຕິກຳຂອງຂະແໜງການອື່ນທີ່ຍັງບໍ່ທັນສຳເລັດ, ຈຳນວນບໍລິສັດເອກະຊົນທີ່ຈົດທະບຽນໃນ ຕລຊລ ບໍ່ເຖິງ 10 ແຫ່ງ, ປະເທດອື່ນມີການປັບປຸງນິຕິກຳທີ່ດີກວ່າ ສປປ ລາວ ແລະ ທະນາຄານໂລກໄດ້ປັບປຸງແບບສອບຖາມ ແລະ ວິທີການຄິດໄລ່ຄະແນນສຳລັບການປະເມີນ ໃນແຕ່ລະໄລຍະ.

ສຄຄຊ ໄດ້ສ້າງຊ່ອງທາງໃນການຮ້ອງຟ້ອງ ຫຼື ແຈ້ງຄວາມຈາກສັງຄົມໃນກໍລະນີສົງໃສ ວ່າມີການລະເມີດລະບຽບກົດໝາຍໃນຂົງເຂດວຽກງານຫຼັກຊັບ ໂດຍສາມາດຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານ 4 ຊ່ອງທາງ ດັ່ງລຸ່ມນີ້:




- ມາຮ້ອງຟ້ອງ ຫຼື ແຈ້ງຄວາມດ້ວຍຕົນເອງ ຢູ່ທີ່ຕຶກຫ້ອງການ ສຄຄຊ;
- ສົ່ງຂໍ້ມູນຜ່ານທາງໄປສະນີ;
- ຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານທາງໂທລະສັບ (ເບີໂທສາຍດ່ວນ 1602);
- ຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານທາງ ອີເມວ ແລະ ເວັບໄຊທ໌ຂອງ ຄຄຊ (www.lsc.gov.la).

## 2.6 ການບັງຄັບໃຊ້ກົດໝາຍ ແລະ ນິຕິກຳໃນຂົງເຂດວຽກງານຫຼັກຊັບ

ໃນປີ 2020 ສຄຄຊ ໄດ້ເພີ່ມຄວາມເຂັ້ມງວດໃນການຕິດຕາມ ແລະ ຈັດຕັ້ງປະຕິບັດນິຕິກຳທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ເຊິ່ງຜ່ານການຕິດຕາມ, ກວດກາ ເຫັນວ່າ ມີ ບໍລິສັດຫຼັກຊັບ ແລະ ບໍລິສັດຈົດທະບຽນ ຈຳນວນໜຶ່ງ ທີ່ເຄື່ອນໄຫວບໍ່ສອດຄ່ອງກັບກົດໝາຍວ່າດ້ວຍຫຼັກຊັບ ແລະ ລະບຽບການກ່ຽວຂ້ອງກັບວຽກງານຫຼັກຊັບ ຊຶ່ງ ສຄຄຊ ກໍໄດ້ຄົ້ນຄວ້າ ແລະ ປະຕິບັດມາດຕະການຕໍ່ເປົ້າໝາຍດັ່ງກ່າວ ດ້ວຍຮູບການ ກ່າວເຕືອນ 1 ກໍລະນີ ແລະ ປັບໃໝ 5 ກໍລະນີ.

## 2.7 ການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່

ເພື່ອເຮັດໃຫ້ມວນຊົນມີຄວາມຮູ້, ຄວາມເຂົ້າໃຈ ແລະ ສາມາດມີສ່ວນຮ່ວມໃນການພັດທະນາຕະຫຼາດທຶນໄດ້ຢ່າງຖືກຕ້ອງຕາມລະບຽບການກຳນົດ,ສຄຄຊ ໄດ້ເອົາໃຈໃສ່ສືບຕໍ່ໂຄສະນາເຜີຍແຜ່ ໂດຍການຈັດກອງປະຊຸມເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ ໃຫ້ແກ່ພາກສ່ວນຕ່າງໆໃນສັງຄົມ ເປັນຕົ້ນແມ່ນ ບັນດາອົງການພາກລັດ, ສະຖາບັນການສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນນະຄອນຫຼວງ ແລະ ຕ່າງແຂວງ ຈຳນວນ 17 ຄັ້ງ ມີຜູ້ເຂົ້າຮ່ວມທັງໝົດ 1.647 ທ່ານ (ຫຼຸດປີ 2019 ຈຳນວນ 5 ຄັ້ງ), ເຜີຍແຜ່ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ໃຫ້ແກ່ພາກສ່ວນຕ່າງໆໃນສັງຄົມ ຈຳນວນ 8 ຄັ້ງ ມີຜູ້ເຂົ້າຮ່ວມ 930 ທ່ານ ແລະ ເຜີຍແຜ່ນິຕິກຳກ່ຽວຂ້ອງໃຫ້ບັນດາບໍລິສັດຈົດທະບຽນ ຈຳນວນ 5 ຄັ້ງ ໃຫ້ແກ່ 10 ບໍລິສັດ ມີຜູ້ເຂົ້າຮ່ວມ 110 ທ່ານ. ນອກຈາກນີ້, ສຄຄຊ ໂດຍສົມທົບກັບ ຕລຊລ, ບໍລິສັດຫຼັກຊັບ ແລະ ບໍລິສັດຈົດທະບຽນຈຳນວນໜຶ່ງ ໄດ້ສ້າງໂຄງການສົ່ງເສີມຄວາມຮູ້ວຽກງານຕະຫຼາດທຶນ (CMEP) ເພື່ອຄົ້ນຄວ້າວຽກງານໂຄສະນາເຜີຍແຜ່ຮ່ວມກັນ ແນໃສ່ໃຫ້ວຽກງານດັ່ງກ່າວມີຈຸດສຸມຍິ່ງຂຶ້ນ.

ຄຽງຄູ່ກັນນີ້, ສຄຄຊ ໄດ້ຄົ້ນຄວ້າພັດທະນາຮູບແບບການໂຄສະນາທີ່ຫຼາກຫຼາຍເຂົ້າເຖິງມວນຊົນໄດ້ເລິກເຊິ່ງຂຶ້ນເປັນຕົ້ນແມ່ນ ສ້າງກາຕູນເອນິເມຊັນ ຈຳນວນ 3 ເລື່ອງ, ສ້າງຫົວຂໍ້ສາລະຕະຫຼາດທຶນ (Infographic) 12 ຫົວຂໍ້ເຜີຍແຜ່ຜ່ານ Facebook, ຜະລິດສະປອດໂຄສະນາກ່ຽວກັບວຽກງານຕະຫຼາດທຶນ ເພື່ອເຜີຍແຜ່ທາງວິທະຍຸ CRI ແລະ ວິທະຍຸແຫ່ງຊາດລາວ ຈຳນວນ 3 ເລື່ອງ, ຈັດພິມສະຕິກເກີ້ 1602 (ຮູບແບບໃໝ່) ເພື່ອເປັນອີກໜຶ່ງຊ່ອງທາງໃນການເປີດກວ້າງຮັບຄຳຮ້ອງຟ້ອງ ແລະ ແຈ້ງຄວາມຈາກສັງຄົມ, ຜະລິດແຜ່ນພັບແຈກຢາຍມວນຊົນ; ໄດ້ສຳເລັດການຕັດຕໍ່ລາຍການໂທລະພາບ “ເສັ້ນທາງສູ່ຕະຫຼາດທຶນລາວ” ເພື່ອສົ່ງໃຫ້ໂທລະພາບແຫ່ງຊາດລາວອອກອາກາດ ຈຳນວນ 104 ຄັ້ງ ຈຳນວນ 52 ເທັບ ແລະ ໄດ້ເປີດນຳໃຊ້ຫ້ອງສະໝຸດ ສຄຄຊ ຢ່າງເປັນທາງການ ເພື່ອເຜີຍແຜ່ວຽກງານຕະຫຼາດທຶນ. ຜ່ານການຈັດຕັ້ງ

ປະຕິບັດວຽກງານດັ່ງກ່າວ ສາມາດເຮັດໃຫ້ມວນຊົນມີຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບວຽກງານຕະຫຼາດທຶນຫຼາຍຂຶ້ນ ເປັນຕົ້ນແມ່ນ ຄວາມເຂົ້າໃຈກ່ຽວກັບຮຸ້ນ, ການລົງທຶນ ແລະ ການເຄື່ອນໄຫວຂອງບໍລິສັດຈົດທະບຽນໃນ ຕລຊລ.

**ຮູບພາບ 5: ກາຕູນເອນິເມຊັນກ່ຽວກັບພາລະບົດບາດຂອງ ສຄຄຊ, ບັນຍາກາດການຖ່າຍທຳລາຍການໂທລະພາບ "ເສັ້ນທາງ ສູ່ຕະຫຼາດທຶນລາວ" ແລະ ການລົງໂຄສະນາເຜີຍແຜ່ກັບທີ່.**










## 2.8 ການຮ່ວມມືສາກົນ

ສຄຄຊ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານພົວພັນຮ່ວມມືກັບສາກົນ ໃນຮູບແບບສອງຝ່າຍ, ຫຼາຍຝ່າຍ ແລະ ກັບອົງການຈັດຕັ້ງສາກົນ ຕາມແນວທາງນະໂຍບາຍຂອງພັກ-ລັດວາງອອກ ເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການ, ຖອດຖອນບົດຮຽນ, ກໍ່ສ້າງບຸກຄະລາກອນ ແລະ ແລກປ່ຽນຂໍ້ມູນຂ່າວສານ.

ໃນຮູບແບບສອງຝ່າຍ, ສຄຄຊ ໄດ້ຮ່ວມມືກັບ ຄຄຊ ສປ.ຈີນ, ຫວຽດນາມ, ໄທ, ສ.ເກົາຫຼີ, ຍີ່ປຸ່ນ, ສະຖາບັນ IOD ໄທ, ສະຖາບັນ CPA Australia, ສະຖາບັນຄົ້ນຄວ້າ ໂນມູຣະ, ຕະຫຼາດຫຼັກຊັບໄທ ແລະ ລັດຖະບານລຸກຊຳບວກ ຢ່າງເປັນປົກກະຕິ. ໃນນີ້ ອັນພົ້ນເດັ່ນ, ສຄຄຊ ໄດ້ສຳເລັດການຄົ້ນຄວ້າການຂໍທຶນສະໜັບສະໜູນຈາກກະຊວງການຕ່າງປະເທດລຸກຊຳບວກ ເຂົ້າໃນການພັດທະນາຕະຫຼາດທຶນລາວ ແລະ ສປປ ລາວ ກໍ່ໄດ້ຮັບຮອງເອົາສັນຍາການຮ່ວມມື ລະຫວ່າງ ລັດຖະບານລາວ ແລະ ລັດຖະບານລຸກຊຳບວກ (LAO/032) ແລ້ວ ເຊິ່ງຄາດວ່າຈະໄດ້ເລີ່ມຈັດຕັ້ງປະຕິບັດໂຄງການໃນຕົ້ນປີ 2021. ພ້ອມນີ້, ສຄຄຊ ໄດ້ສຳເລັດການເຊັນສັນຍາຮ່ວມມືກັບສະຖາບັນກຳມະການບໍລິສັດໄທ (IOD Thai) ເພື່ອພັດທະນາວຽກງານຝຶກອົບຮົມກ່ຽວກັບວຽກງານຫຼັກຊັບ. ພາຍໃຕ້ການຮ່ວມມືສອງຝ່າຍດັ່ງກ່າວ ໄດ້ຈັດກອງປະຊຸມສຳມະນາຜ່ານ Webinar ຈຳນວນ 3 ຄັ້ງ ຈຳນວນ 40 ເທື່ອຄົນ ແລະ ໄປຖອດຖອນບົດຮຽນຢູ່ບັນດາປະເທດດັ່ງກ່າວ 1 ຄັ້ງ ຈຳນວນ 1 ຄົນ.

**ຮູບພາບ 6: ການເຂົ້າຮ່ວມກອງປະຊຸມສອງຝ່າຍຮ່ວມກັບ ສສ. ຫວຽດນາມ ແລະ ສຳມະນາຮ່ວມກັບ ກລຕ ໄທ**




ໃນຮູບແບບຫຼາຍຝ່າຍ, ສຄຄຊ ໄດ້ເຂົ້າຮ່ວມກອງປະຊຸມຕ່າງໆທີ່ຕິດພັນ ເປັນຕົ້ນແມ່ນ ກອງປະຊຸມໂຄງການການພັດທະນາຕະຫຼາດທຶນອາຊຽນ (ACMF Chair), ກອງປະຊຸມ ACMF deputies ແລະ ກອງປະຊຸມຮ່ວມ ລະຫວ່າງຄະນະກຳມະການພັດທະນາຕະຫຼາດທຶນ (WC-CMD) ແລະ ACMF, ກອງປະຊຸມການພັດທະນາຕະຫຼາດພັນທະບັດ

ອາຊຽນ+3 (ABMF) ຄັ້ງທີ 33 ແລະ ກອງປະຊຸມການພັດທະນາຕະຫຼາດພັນທະບັດອາຊຽນ+3 (ABMF) ຄັ້ງທີ 34 ແລະ ການຊໍາລະສະສາງຂ້າມແດນ (CSIF) ຄັ້ງທີ 21, ກອງປະຊຸມຄະນະກໍາມະການລະດັບສູງວຽກງານການເຊື່ອມໂຍງຂະແໜງການເງິນອາຊຽນ (SLC) ໂດຍການເຂົ້າຮ່ວມກັບທີ່ ແລະ ຜ່ານທາງອອນລາຍ. ພາຍໃຕ້ການຮ່ວມມືດັ່ງກ່າວ, ສຄຄຊ ໄດ້ສົ່ງພະນັກງານເຂົ້າຮ່ວມສໍາມະນາໃນຫົວຂໍ້ຕ່າງໆ (ຜ່ານທາງອອນລາຍ) ຈໍານວນ 9 ຄັ້ງ ຈໍານວນ 45 ເທື່ອຄົນ.

**ຮູບພາບ 7: ການເຂົ້າຮ່ວມກອງປະຊຸມ ACMF**




ໃນຮູບແບບການພົວພັນຮ່ວມມືກັບອົງການຈັດຕັ້ງສາກົນ, ສຄຄຊ ໄດ້ຮັບການຊ່ວຍເຫຼືອຈາກທະນາຄານພັດທະນາອາຊີ (ADB) ໃນການສໍາມະນາຜ່ານ Webinar ໃນຫົວຂໍ້: ຕະຫຼາດພັນທະບັດແບບມືອາຊີບ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ໄດ້ຮ່ວມມືກັບອົງການການເງິນສາກົນ (IFC) ໃນການຈັດສໍາມະນາຜ່ານ Webinar ກ່ຽວກັບວຽກງານການຄຸ້ມຄອງບໍລິຫານສໍາລັບບໍລິສັດຈົດທະບຽນ ຈໍານວນ 4 ຄັ້ງ ແລະ ອື່ນໆ. ພາຍໃຕ້ການຮ່ວມມືດັ່ງກ່າວ ພະນັກງານໃນຂົງເຂດຕະຫຼາດທຶນ ໄດ້ເຂົ້າຮ່ວມຖອດຖອນບົດຮຽນ (ຜ່ານທາງອອນລາຍ) ຈໍານວນ 10 ຄັ້ງ ຈໍານວນ 700 ເທື່ອຄົນ.

ຕິດພັນກັບວຽກງານຂອງອົງການ IOSCO, ຄຄຊ ສປປ ລາວ ໄດ້ເຂົ້າຮ່ວມກອງປະຊຸມ ປະຈໍາປີ 2020 ຂອງ IOSCO, ກອງປະຊຸມປະຈໍາປີ 2020 ຂອງຄະນະກໍາມະການຕະຫຼາດໃໝ່ (GEMC) ແລະ ກອງປະຊຸມປະຈໍາປີ 2020 ຂອງຄະນະກໍາມະການພາກພື້ນອາຊີ-ປາຊີຟິກ ຂອງ IOSCO (ຜ່ານທາງອອນລາຍ) ແລະ ໄດ້ສືບຕໍ່ກະກຽມຄວາມພ້ອມຮອບດ້ານໃນການສະໝັກເຂົ້າເປັນສະມາຊິກອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO). ພ້ອມນີ້, ພາຍໃຕ້ການຮ່ວມມືດັ່ງກ່າວ, ສຄຄຊ ໄດ້ສົ່ງພະນັກງານເຂົ້າຮ່ວມສໍາມະນາໃນຫົວຂໍ້ທີ່ຕິດພັນ ຈໍານວນ 3 ຄັ້ງ ຈໍານວນ 15 ເທື່ອຄົນ.

ຮູບພາບ: ການຈັດສຳມະນາຮ່ວມກັບອົງການການເງິນສາກົນ (IFC).







## III. ທິດທາງແຜນການ ປີ 2021

### 1. ຄາດຄະເນສະພາບຕະຫຼາດທຶນຂອງຕ່າງປະເທດ

ສະພາບຕະຫຼາດທຶນຂອງຕ່າງປະເທດ ຄາດວ່າຈະມີທັງກາລະໂອກາດ ແລະ ສິ່ງທ້າທາຍ ຈາກສະພາບຄວາມບໍ່ແນ່ນອນຂອງເສດຖະກິດໂລກ ບວກກັບ ໄພຂົ່ມຂູ່ຈາກທຳມະຊາດ, ໂລກລະບາດ ແລະ ບັນຫາອື່ນໆ. ໃນທ່າມກາງຄວາມບໍ່ແນ່ນອນຂອງສະພາບແວດລ້ອມຫຼາຍດ້ານ, ກອງທຶນການເງິນສາກົນ (International Monetary Fund ຫຼື IMF) ໄດ້ຄາດຄະເນອັດຕາການຂະຫຍາຍຕົວຂອງເສດຖະກິດໂລກ ຄາດວ່າຈະເພີ່ມຂຶ້ນຫຼາຍ ຢູ່ໃນລະດັບ 6% ໃນປີ 2021 ຈາກ -3,5% ໃນປີ 2020[2] ເນື່ອງຈາກຄວາມເຊື່ອໝັ້ນຕໍ່ການພັດທະນາວັກຊີນຕ້ານການແຜ່ລະບາດຂອງພະຍາດ COVID-19 ແລະ ນະໂຍບາຍຊຸກຍູ້ເພີ່ມເຕີມ ຢູ່ບັນດາປະເທດມະຫາອຳນາດ ຊຶ່ງຄາດວ່າສະພາບຕະຫຼາດທຶນ ກໍປັບຕົວດີຂຶ້ນ ພາຍຫຼັງປະເທດຕ່າງໆປະຕິບັດມາດຕະການແກ້ໄຂທີ່ເໝາະສົມ.

---

[2] ແຫຼ່ງຂໍ້ມູນ: ກອງທຶນການເງິນສາກົນ (ເມສາ, 2021). "ຄາດຄະເນເສດຖະກິດໂລກ".

## 2. ຄາດຄະເນສະພາບຕະຫຼາດທຶນຂອງ ສປປ ລາວ

ຕະຫຼາດທຶນຂອງ ສປປ ລາວ ຄາດວ່າຈະຄ່ອຍຄ່ອຍປັບຕົວດີຂຶ້ນຈາກສະພາບການຂະຫຍາຍຕົວເສດຖະກິດຂອງ ສປປ ລາວ ແລະ ຂອງຕ່າງປະເທດ ທີ່ມີທ່າອ່ຽງດີຂຶ້ນເມື່ອທຽບໃສ່ປີຜ່ານມາ ເປັນຕົ້ນ ການລະດົມທຶນເພີ່ມຂອງວິສາຫະກິດ ແລະ ຜົນການດຳເນີນງານຂອງບໍລິສັດຈົດທະບຽນ, ການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ ເນື່ອງຈາກອັດຕາການຂະຫຍາຍຕົວຂອງເສດຖະກິດໂລກທີ່ຄາດວ່າຈະດີຂຶ້ນ ແລະ ຄວາມຄືບໜ້າໃນການແກ້ໄຂການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ ຢູ່ບັນດາປະເທດໃນທົ່ວໂລກ. ຄຽງຄູ່ກັນນີ້, ເພື່ອສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ຕະຫຼາດທຶນລາວ ສຄຄຊ ຈະຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ແລະ ກົນໄກດ້ານຕ່າງໆ ໃຫ້ມີຄວາມຄ່ອງຕົວຫຼາຍຂຶ້ນ ພ້ອມທັງ ປະສານພາກສ່ວນກ່ຽວຂ້ອງເພື່ອແກ້ໄຂບັນຫາອຸດຕັນວຽກງານຫຼັກຊັບ ເຊິ່ງລາຍລະອຽດໄດ້ສະແດງອອກໃນໜ້າວຽກຕົ້ນຕໍໃນປີ 2021.

## 3. ໜ້າວຽກຕົ້ນຕໍທີ່ຕ້ອງໄດ້ສຸມໃສ່ໃນປີ 2021

### 3.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ວຽກງານຫຼັກຊັບ

ອີງໃສ່ສະພາບການຂະຫຍາຍຕົວຂອງວຽກງານຫຼັກຊັບ ທັງພາຍໃນປະເທດ, ພາກພື້ນ ແລະ ສາກົນ ໃນແຕ່ລະໄລຍະໄດ້ຮຽກຮ້ອງໃຫ້ມີນິຕິກຳເພື່ອມາຄຸ້ມຄອງບັນດາພຶດຕິກຳ ຫຼື ການເຄື່ອນໄຫວວຽກງານອັນໃໝ່. ສຳລັບປີ 2021 ຄາດໝາຍ ແມ່ນໃຫ້ສຳເລັດການສ້າງ ແລະ ປັບປຸງນິຕິກຳລຸ່ມກົດໝາຍໃຫ້ມີຄວາມສອດຄ່ອງກັບກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ຢ່າງໜ້ອຍ 5 ສະບັບ ເພື່ອເປັນບ່ອນອີງໃນການເຄື່ອນໄຫວວຽກງານຫຼັກຊັບໃຫ້ມີຄວາມຄ່ອງຕົວຍິ່ງຂຶ້ນ. ພ້ອມນີ້ ສຄຄຊ ຈະໄດ້ຄົ້ນຄວ້າທົບທວນປັບປຸງແຜນຍຸດທະສາດການພັດທະນາຕະຫຼາດທຶນ ຂອງ ສປປ ລາວ 10 ປີ (2016 -2025 ແລະ ວິໄສທັດຮອດປີ 2030 ໂດຍຕີລາຄາການຈັດຕັ້ງປະຕິບັດແຜນຍຸດທະສາດການພັດທະນາຕະຫຼາດທຶນຂອງ ສປປ ລາວ 5 ປີ (2016-2020) ແລະ ທົບທວນແຜນການ 5 ປີຕໍ່ໜ້າ (2021-2025) ເພື່ອໃຫ້ແທດເໝາະກັບເງື່ອນໄຂ, ສະພາບ ແລະ ທິດທາງການພັດທະນາຕະຫຼາດທຶນຂອງ ສປປ ລາວ ໃນຕໍ່ໜ້າ.

### 3.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

ສຄຄຊ ຈະສືບຕໍ່ເອົາໃຈໃສ່ຄົ້ນຄວ້າການສະເໜີອອກຈຳໜ່າຍຫຼັກຊັບ ຢ່າງໜ້ອຍ 1-2 ກໍລະນີ; ສືບຕໍ່ ຈັດກອງປະຊຸມສຳມະນາໃຫ້ແກ່ບັນດາລັດວິສາຫະກິດທີ່ນອນຢູ່ໃນເປົ້າໝາຍ ເພື່ອສ້າງຄວາມເຂົ້າໃຈ ແລະ ເຫັນຄວາມສຳຄັນ ຂອງການອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ; ສືບຕໍ່ຊຸກຍູ້ ລັດວິສາຫະກິດ ທີ່ນອນໃນບັນຊີລາຍຊື່ໃນການກະກຽມຄວາມພ້ອມຮອບດ້ານເພື່ອຫັນເປັນບໍລິສັດມະຫາຊົນ, ອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນ ຕລຊລ; ເອົາໃຈໃສ່ຕິດຕາມການເຄື່ອນໄຫວຂອງບັນດາບໍລິສັດຈົດທະບຽນ ໃຫ້ສອດຄ່ອງຕາມລະບຽບການ ເປັນຕົ້ນແມ່ນ ການລາຍງານ ແລະ ເປີດເຜີຍຂໍ້ມູນ, ການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຫຼັກຊັບ, ການຈັດຕັ້ງກອງປະຊຸມຜູ້ຖືຮຸ້ນ ແລະ ການຈ່າຍເງິນປັນຜົນຂອງບໍລິສັດຈົດທະບຽນ. ນອກຈາກນັ້ນ, ຈະປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າສ້າງແຜນຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ສຳລັບຂະແໜງຫຼັກຊັບ (IFRS Roadmap); ຊຸກຍູ້ ແລະ ຕິດຕາມ ການວິເຄາະຊ່ອງຫວ່າງການຂ້າມຜ່ານສູ່ການຈັດຕັ້ງປະຕິບັດ IFRS (Gap Analysis) ຂອງ ບໍລິສັດຈົດທະບຽນ; ຈັດຝຶກອົບຮົມໃຫ້ແກ່ບໍລິສັດຈົດທະບຽນກ່ຽວກັບວຽກງານການຄຸ້ມຄອງບໍລິຫານ (Corporate Governance) ໃນແຕ່ລະໄລຍະ ແລະ ຊຸກຍູ້, ຕິດຕາມ ບໍລິສັດຈົດທະບຽນທີ່ສະໝັກໃຈ ດຳເນີນການທົດລອງການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ ໂດຍນຳໃຊ້ Lao CG Scorecard ຢ່າງເປັນປົກກະຕິ.

### 3.3 ການຄຸ້ມຄອງຕະຫຼາດຫຼັກຊັບ ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ

ສຄຄຊ ຈະສືບຕໍ່ຕິດຕາມການເຄື່ອນໄຫວຂອງຕະຫຼາດຫຼັກຊັບລາວຢ່າງໃກ້ຊິດ ໂດຍການກວດກາທາງເອກະສານ ແລະ ລົງກວດກາກັບທີ່; ຊຸກຍູ້ ຕລຊລ ຕິດຕາມສະພາບການເໜັງຕີງຂອງລາຄາຮຸ້ນຂອງບັນດາບໍລິສັດຈົດທະບຽນ, ການຊື້-ຂາຍຫຼັກຊັບທີ່ບໍ່ຍຸຕິທຳ ແລະ ລາຍງານຜົນການຊື້-ຂາຍຫຼັກຊັບໃຫ້ແກ່ມວນຊົນຮັບຮູ້ຢ່າງເປັນປົກກະຕິ ແລະ ປັບປຸງກົນໄກການຊື້-ຂາຍຂອງຕົນ ໃຫ້ສາມາດຕອບສະໜອງຄວາມຕ້ອງການຂອງຜູ້ລົງທຶນຢ່າງຄ່ອງຕົວຂຶ້ນ; ສືບຕໍ່ສ້າງເງື່ອນໄຂໃຫ້ວິສາຫະກິດຂະໜາດກາງ ແລະ ນ້ອຍ (SMEs) ສາມາດລະດົມທຶນຜ່ານຕະຫຼາດທຶນ, ສືບຕໍ່ຄົ້ນຄວ້າຜະລິດຕະພັນຫຼັກຊັບທີ່ເໝາະສົມກັບຕະຫຼາດທຶນລາວ ເພື່ອສ້າງເງື່ອນໄຂໃຫ້ຜູ້ລົງທຶນສາມາດລົງທຶນໃນຫຼັກຊັບໃຫ້ຫຼາຍຂຶ້ນ ເປັນຕົ້ນແມ່ນ: ກອງທຶນເພື່ອການລົງທຶນໃນບໍລິສັດ (PE Fund) ແລະ ທຸລະກິດຮ່ວມລົງທຶນ (Venture Capital), ຮຸ້ນບູລິມະສິດ, ໃບຢັ້ງຢືນສິດໃນການຊື້ຮຸ້ນ (Warrant) ແລະ ອື່ນໆ.

### 3.4 ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ

ສຄຄຊ ຈະສືບຕໍ່ເອົາໃຈໃສ່ຄຸ້ມຄອງຕິດຕາມກວດກາການເຄື່ອນໄຫວ ຂອງສະຖາບັນສື່ກາງດ້ານຫຼັກຊັບຢ່າງເປັນປົກກະຕິ ຜ່ານການກວດກາທາງເອກະສານ ແລະ ລົງກວດກາກັບທີ່; ສືບຕໍ່ຕິດຕາມຄວາມສ່ຽງຂອງບໍລິສັດຫຼັກຊັບຕາມຫຼັກການປະເມີນ ແບບຕີລາຄາຄວາມສ່ຽງ (Risk-Based Supervision) ແລະ ຕິດຕາມບໍລິສັດຫຼັກຊັບໃນການຈັດຕັ້ງປະຕິບັດພາລະບົດບາດຂອງຕົນຕາມກົດໝາຍ AML ແລະ ຕິດຕາມຊຸກຍູ້ການປັບປຸງແກ້ໄຂບັນຫາຕາມຜົນການກວດກາປີ 2020 ຂອງບໍລິສັດຫຼັກຊັບ; ສືບຕໍ່ປະສານກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າກົນໄກການຄຸ້ມຄອງບໍລິສັດປະເມີນມູນຄ່າຊັບສິນ ແລະ ຊຸກຍູ້ບັນດາບໍລິສັດປະເມີນມູນຄ່າຊັບສິນ ໃນການສ້າງຕັ້ງສະມາຄົມປະເມີນມູນຄ່າຊັບສິນ. ພ້ອມນີ້, ສຄຄຊ ຈະສືບຕໍ່ເອົາໃຈໃສ່ຄຸ້ມຄອງນັກວິຊາຊີບທີ່ໄດ້ຮັບການຮັບຮອງຈາກ ສຄຄຊ ເພື່ອທັນພວກກ່ຽວໃຫ້ເຄື່ອນໄຫວຢ່າງມືອາຊີບ.

### 3.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ

ເພື່ອເປັນການປົກປ້ອງຜົນປະໂຫຍດຂອງຜູ້ລົງທຶນ, ສຄຄຊ ຈະສືບຕໍ່ໃນການຕິດຕາມ ແລະ ກວດກາ ໃນການຈັດຕັ້ງປະຕິບັດນິຕິກຳ ໃຫ້ເຂັ້ມງວດ ພ້ອມທັງສະກັດກັ້ນ ແລະ ແກ້ໄຂ ການລະເມີດລະບຽບກົດໝາຍ ໃຫ້ຫຼຸດລົງເທື່ອລະກ້າວດ້ວຍຮູບການສ້າງ ແລະ ປັບປຸງ ນິຕິກຳທີ່ກ່ຽວຂ້ອງ. ພ້ອມນີ້ ເພື່ອປະຕິບັດຕາມຄຳສັ່ງ 02/ນຍ ສຄຄຊ ຈະສືບຕໍ່ຄົ້ນຄວ້າສ້າງ ແລະ ປັບປຸງ ນິຕິກຳທີ່ຕິດພັນກັບການປົກປ້ອງຜູ້ລົງທຶນລາຍຍ່ອຍ ໃນຂົງເຂດວຽກງານຫຼັກຊັບ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອປັບປຸງນິຕິກຳທີ່ກ່ຽວຂ້ອງກັບພາກສ່ວນອື່ນທີ່ຕິດພັນກັບວຽກງານດັ່ງກ່າວ ໃຫ້ສຳເລັດຕາມແຜນທີ່ໄດ້ກຳນົດໄວ້ ເພື່ອໃຫ້ຕົວຊີ້ວັດດັ່ງກ່າວ ໄດ້ຮັບການປັບປຸງດີຂຶ້ນ. ນອກນັ້ນ ຈະເພີ່ມທະວີໃນການໂຄສະນາເຜີຍແຜ່ໃຫ້ມວນຊົນ ຮັບຮູ້ ແລະ ເຂົ້າໃຈຕໍ່ລະບຽບກົດໝາຍດັ່ງກ່າວ ໃນຂົງເຂດວຽກງານຫຼັກຊັບ ແລະ ຂົງເຂດກ່ຽວຂ້ອງທີ່ປິ່ນອ້ອມກັບວຽກງານຫຼັກຊັບ ພ້ອມທັງ ເອົາໃຈໃສ່ຕິດຕາມ ຜ່ານຊ່ອງທາງການຮ້ອງຟ້ອງ ຫຼື ແຈ້ງຄວາມຈາກສັງຄົມ ຢ່າງເປັນປົກະຕິ ແລະ ຕໍ່ເນື່ອງ ໃຫ້ເລິກເຊິ່ງ ແລະ ກວ້າງຂວາງຂຶ້ນກວ່າເກົ່າ.

### 3.6 ການໂຄສະນາເຜີຍແຜ່ ແລະ ໃຫ້ຄວາມຮູ້ແກ່ມວນຊົນ

ເພື່ອເຮັດໃຫ້ມວນຊົນມີຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບວຽກງານຕະຫຼາດທຶນຂອງ ສປປ ລາວ ນັບມື້ນັບຫຼາຍຂຶ້ນ, ສຄຄຊ ຈະສືບຕໍ່ໂຄສະນາເຜີຍແຜ່ວຽກງານຫຼັກຊັບ ໂດຍປັບປຸງເນື້ອໃນ ແລະ ຮູບແບບໂຄສະນາ ເພື່ອໃຫ້ແທດເໝາະກັບແຕ່ລະກຸ່ມເປົ້າໝາຍຜ່ານຊ່ອງທາງໂຄສະນາຕ່າງໆ ເພື່ອໃຫ້ສັງຄົມໄດ້ຮັບຮູ້ຢ່າງກວ້າງຂວາງ ແລະ ທົ່ວເຖິງ ໂດຍສະເພາະເຜີຍແຜ່ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ), ລະບຽບການທີ່ກ່ຽວຂ້ອງ ແລະ ໂຄສະນາເຜີຍແຜ່ກັບທົ່ວຽກງານຕະຫຼາດທຶນໃນຫົວຂໍ້ຕ່າງໆ ໃຫ້ແກ່ພາກສ່ວນຕ່າງໆໃນສັງຄົມ; ສ້າງສະປ໋ອດໂຄສະນາ ແລະ ສ້າງກະຕູນ Animation ກ່ຽວກັບການໃຫ້ຄວາມຮູ້ວຽກງານຕະຫຼາດທຶນ. ພ້ອມນີ້, ກໍ່ຈະຄົ້ນຄວ້າຈັດຕັ້ງປະຕິບັດໂຄງການຮ່ວມມືຊ່ວຍເຫຼືອສາມຝ່າຍລະຫວ່າງ ປະເທດລຸກຊຳບວກ, ສສ. ຫວຽດນາມ ແລະ ສປປ ລາວ (ໂຄງການ Lao/032) ໃນການພັດທະນາການ

ຝຶກອົບຮົມວຽກງານຫຼັກຊັບ ແລະ ໂຄງການສົ່ງເສີມວຽກງານຕະຫຼາດທຶນ (CMEP) ຮ່ວມກັບ ຕະຫຼາດຫຼັກຊັບລາວ, ບໍລິສັດຫຼັກຊັບ ແລະ ບໍລິສັດຈັດທະບຽນ ເພື່ອສ້າງບັນດາຜູ້ມີສ່ວນຮ່ວມທັນໄປສູ່ຄວາມເປັນມືອາຊີບເທື່ອລະກ້າວ.

### 3.7 ການຮ່ວມມືສາກົນ

ເພື່ອຍົກສູງການພັດທະນາວຽກງານຕະຫຼາດທຶນ ສປປ ລາວ, ສຄຄຊ ຈະສືບຕໍ່ຈັດຕັ້ງປະຕິບັດການຮ່ວມມືສອງຝ່າຍ ເປັນຕົ້ນແມ່ນ: ຄຄຊ ສ.ປ ຈີນ, ຄຄຊ ສສ.ຫວຽດນາມ, ກລຕ ໄທ, ຄຄຊ ສ.ເກົາຫຼີ, ຍີ່ປຸ່ນ, CPA Australia, IOD ໄທ, ສະຖາບັນຄົ້ນຄວ້າໂນມູຣະ, ຕະຫຼາດຫຼັກຊັບໄທ, ລັດຖະບານລຸກຊໍາບວກ ແລະ ອື່ນໆ; ສືບຕໍ່ສ້າງສາຍພົວພັນຮ່ວມຫຼາຍຝ່າຍ ເປັນຕົ້ນແມ່ນ: ການຮ່ວມມືໃນການພັດທະນາຕະຫຼາດທຶນໃນຂອບ 5 ປະເທດເຂດແມ່ນໍ້າຂອງ ແລະ ການຮ່ວມມືໃນຂອບອາຊຽນ ພ້ອມທັງຄົ້ນຄວ້າຄວາມເປັນໄປໄດ້ ໃນການຈັດຕັ້ງປະຕິບັດໂຄງການເຊື່ອມໂຍງຕ່າງໆ ໃນຂອບຕະຫຼາດທຶນອາຊຽນ; ສືບຕໍ່ຮ່ວມມືກັບບັນດາອົງການຈັດຕັ້ງສາກົນຕ່າງໆ ເປັນຕົ້ນ: ອົງການ IFC, ADB ແລະ ການກະກຽມຄວາມພ້ອມຮອບດ້ານ ໃນການສະເໜີເປັນສະມາຊິກສົມບູນຂອງອົງການ IOSCO ແລະ ເຂົ້າຮ່ວມກອງປະຊຸມຕ່າງໆທີ່ຕິດພັນ ແລະ ອື່ນໆ.

# ຂໍ້ມູນຕິດຕໍ່

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ)

ທີ່ຕັ້ງສຳນັກງານ: ບ້ານ ໂພນສະອາດ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ.

PO. Box: 19



Phone: (856-21) 217770

Fax: (856-21) 217806

E-mail: lsco@lsc.gov.la

Website: www.lsc.gov.la

ໂທລະສັບສາຍດ່ວນ: 1602

Facebook: ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

Youtube: ລາຍການ ເສັ້ນທາງສູ່ຕະຫຼາດທຶນລາວ.

# ເອກະສານຊ້ອນທ້າຍ

## 1) ລາຍຊື່ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວທັງໝົດ (ຮອດທ້າຍປີ 2020)

| ລຳດັບ | ລາຍຊື່ | ຊື່ຫຍໍ້ | ເບີໂທຕິດຕໍ່ |
|---|---|---|---|
| 1 | ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | ທຄຕລ ຫຼື BCEL | 021 213 200 |
| 2 | ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ | ຜ-ຟຟລ ຫຼື EDL-GEN | 021 316 142 |
| 3 | ບໍລິສັດ ລາວເວີນ ມະຫາຊົນ | ລວມຊ ຫຼື LWPC | 021 415 477 |
| 4 | ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ | ປທລ ຫຼື PTL | 021 264 834 |
| 5 | ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ | ສ.ວ.ນ ຫຼື SVN | 021 415 645 |
| 6 | ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ | ພກພ ຫຼື PCD | 021 265 394 |
| 7 | ບໍລິສັດ ຊີມັງລາວ ມະຫາຊົນ | ບຊລ ຫຼື LCC | 021 412 111 |
| 8 | ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ | ມຫທຊ ຫຼື MHTL | 021 418 062-6 |
| 9 | ບໍລິສັດ ລາວອາໂກຣເທັກ ມະຫາຊົນ | ລອທ ຫຼື LAT | 021 520 715 |
| 10 | ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ | ວຈຊຕ ຫຼື VCL | 021 288 299 |
| 11 | ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ | ລອຊ ຫຼື LALCO | 021 410 551 |

## 2) ລາຍລະອຽດຂອງສະຖາບັນສື່ກາງດ້ານຫຼັກຊັບ

| ປະເພດສະຖາບັນສື່ກາງ | ລຳດັບ | ຊື່ບໍລິສັດ | ເບີໂທຕິດຕໍ່ |
|---|---|---|---|
| **ບໍລິສັດຫຼັກຊັບ** | 1 | ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ | 021 265 477 |
| | 2 | ບໍລິສັດ ຫຼັກຊັບ ລ້ານຊ້າງ ມະຫາຊົນ | 021 265 468 |
| | 3 | ບໍລິສັດ ຫຼັກຊັບ ລາວ-ຈີນ ຈຳກັດ | 021 419 222 |
| | 4 | ບໍລິສັດ ເອພີເອັມ ລາວ ຈຳກັດ | 021 253 418 |
| **ບໍລິສັດກວດສອບ** | 1 | ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປີ້ສ໌ (ລາວ) | 021 222 717 |
| | 2 | ບໍລິສັດ ເຄພີເອັມຈີລາວ ຈຳກັດ | 021 454 240 |
| | 3 | ບໍລິສັດ ເອີນ ແອນ ຢັງ (ລາວ) ຈຳກັດ | 021455 077 |
| | 4 | ບໍລິສັດ ດີລອຍ (ລາວ) ຈຳກັດ | 021 419 300 |
| **ບໍລິສັດປະເມີນມູນຄ່າຊັບສິນ** | 1 | ບໍລິສັດ ຊິມ ພອບເພີຕີ້ ຄອນເຊົາເທັ້ນ ຈຳກັດ | +662 5304333 |
| | 2 | ບໍລິສັດ ລາວປະເມີນຊັບສິນ ຈຳກັດ | 030 5080163 |
| | 3 | ບໍລິສັດ ປະເມີນມູນຄ່າຊັບສິນ ແກຣນທ໌ ເຊີແມນ (ລາວ) ຈຳກັດ | 020 97799508 |
| | 4 | ບໍລິສັດ ລາວ ສາກົນ ປະເມີນມູນຄ່າຊັບສິນ ຈຳກັດ | 020 55716119 |
| | 5 | ບໍລິສັດ ເອເຊຍໂລຕັດ ປະເມີນມູນຄ່າຊັບສິນ ຈຳກັດ | 020 55569999 |
| | 6 | ບໍລິສັດ ລາວ ເຈົ້ງຊິນ ປະເມີນມູນຄ່າຊັບສິນ ຈຳກັດ | 020 54542169 |
| | 7 | ບໍລິສັດ ລາວວາລູ ປະເມີນມູນຄ່າຊັບສິນ ຈຳກັດ | 020 22229744 |
| | 8 | ບໍລິສັດ ຣິດແອບໄພຣໂຊ ຈຳກັດ | +6662 5156090 |

| | | | |
|---|---|---|---|
| | 9 | ບໍລິສັດ ເຄເຄ ລາວ ປະເມີນມູນຄ່າຊັບສິນ ຈຳກັດ | 020 55655753 |
| **ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື** | 1 | ບໍລິສັດ TRIS Rating Co., Ltd | +66 2098 3035 |
| **ທະນາຄານດູແລຊັບສິນ** | 1 | ທະນາຄານກຸງເທບ ຈຳກັດ (ມະຫາຊົນ) ສາຂາ ນະຄອນຫຼວງວຽງຈັນ | 021 213 560 |
| | 2 | ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ | 021 258 888 |
| | 3 | ທະນາຄານ ແຫ່ງປະເທດຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ | 021 228 888 |